ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ເມສາ 2024
ປີທີ 13
ສະບັບທີ 965
ລາຍສັປະດາ

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນມີນາ 2024

(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນມີນາ 2024 ໄດ້ດຳເນີນໃນລະຫວ່າງວັນທີ02-03 ເມສານີ້ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳ ຜູ້ຮັກສາການແທນປະທານຄະນະປະຈຳສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານ ແລະກຳມະການຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.




ກອງປະຊຸມໄດ້ຮັບຟັງການສະເໜີພິຈາລະນາອອກມະຕິຕົກລົງຂອງສະພາແຫ່ງຊາດ ເພື່ອອະນຸມັດທາງດ້ານຫຼັກການກ່ຽວກັບການຂຶ້ນທະບຽນອອກໃບຕາດິນກະສິກຳ ແລະດິນປຸກສ້າງທີ່ນອນໃນຂອບເຂດ3 ປະເພດປ່າໃຫ້ກັບປະຊາຊົນ;ລາຍງານຜົນການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍຈຳນວນ 5 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະ

ອ່ານຕໍ່ໜ້າ 4

## ສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່

ປີເຖາະກຽມຍ່າງຍ້າຍ
ປີມະໂລງນຳເອົາ
ມີທັງພອນໄຊແກ້ວ
ຍື່ນປະຊາພີ່ນ້ອງ

ໄກຈາກຈອນໜີ
ສິ່ງດີມາຕ້ອນ
ເງິນຄຳຂອງມີຄ່າ
ການນຳພ້ອມຄູ່ຊູ່ຄົນ

ປີໃໝ່ນີ້ ຂໍໃຫ້ມີສຸກລົ້ນ
ຄິດປະສົງຫວັງໃດ
ໜ້າທີ່ການງານກ້າວ
ພັດທະນາສືບສ້າງ

ສົມດັ່ງມະໂນໝາຍ ທຸກທ່ານເນີ !
ຈົ່ງສົມພະໄນໝາຍມຸ້ງ
ພະລານາໄນແຂງແກ່ນ
ລາວໃຫ້ຮຸ່ງຈະເລີນ ຊອບແລ້ວ !

## ຄະນະຜູ້ແທນສະພາແຫ່ງຊາດລາວ ສຳເລັດການຢ້ຽມຢາມ ແລະ ເຮັດວຽກຢູ່ຝຣັ່ງ



ອ່ານຕໍ່ໜ້າ 4

## ມອບ-ຮັບໜ້າທີ່ເລຂາທິການ, ປະທານ ກສຕສ

(ສພຊ) - ໃນຕອນບ່າຍຂອງວັນພຸດທີ03ເມສາ2024 ທີ່ສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບໜ້າທີ່ ລະຫວ່າງເລຂາທິການສະພາແຫ່ງຊາດ ຜູ້ເກົ່າ ກັບ ຜູ້ໃໝ່ ແລະ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ຜູ້ເກົ່າ ກັບ ຜູ້ໃໝ່; ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳ ຜູ້ຮັກສາການແທນປະທານຄະນະປະຈຳສະພາແຫ່ງ




ຊາດ (ຄປຈສພຊ). ເຂົ້າຮ່ວມມີບັນດາທ່ານຮອງປະທານ ແລະ ກຳມະການ ຄປຈສພຊ; ຮອງປະທານກຳມາທິການ, ຮອງເລຂາ

ອ່ານຕໍ່ໜ້າ 4

## ສຳມະນາລະດັບສູງວຽກງານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້

(ສພຊ) - ໃນວັນທີ 29 ມີນາ 2024 ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມສຳມະນາລະດັບສູງກ່ຽວກັບວຽກງານການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ໂດຍການເປັນປະທານກ່າວເປີດຂອງທ່ານ ສົມມາດ ພົລເສນາ ຮອງປະທານຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ເຂົ້າຮ່ວມມີທ່ານລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ທ່ານຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ບັນດາທ່ານຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ບັນດາທ່ານ

ອ່ານຕໍ່ໜ້າ 4




## ຮອງປະທານສະພາແຫ່ງຊາດ ເຊັນປຶ້ມໄວ້ອາໄລຕໍ່ຄອບຄົວຜູ້ເສຍຊີວິດຢູ່ລັດເຊຍ



(ສພຊ) - ໃນວັນທີ 29 ມີນາຜ່ານມາ ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ນຳພາຄະນະ ເຂົ້າຮ່ວມເຊັນປຶ້ມໄວ້ອາໄລ ທີ່ສະຖານທູດສະຫະພັນລັດເຊຍ ປະຈຳ ສປປ ລາວ ໂດຍການຕ້ອນຮັບຂອງທ່ານ ວະລາດິເມຍ ກາລີນິນ (Vladimir Kalinin) ເອກອັກຄະລັດຖະທູດ ແຫ່ງ ສະຫະພັນລັດເຊຍ ປະຈຳ ສປປ ລາວ ເຊິ່ງມີເນື້ອໃນດັ່ງນີ້:

"ໃນນາມຄະນະປະຈຳສະພາແຫ່ງຊາດ, ຄະນະມິດຕະພາບລັດຖະສະພາລາວ-ລັດເຊຍ, ສະມາຊິກສະພາແຫ່ງຊາດ ແຫ່ງ ສປປລາວ, ຂ້າພະເຈົ້າຂໍສະແດງຄວາມເສົ້າສະຫຼົດໃຈຢ່າງສຸດຊຶ້ງ ແລະ ແບ່ງປັນຄວາມໂສກເສົ້າໄປຍັງລັດຖະສະພາສະຫະພັນຣັດເຊຍ ລັດຖະບານແລະປະຊາຊົນແຫ່ງ ສະຫະພັນລັດເຊຍ ໂດຍສະເພາະຄອບຄົວຜູ້ຖືກເຄາະຮ້າຍຕໍ່ເຫດການຄົນຮ້າຍໃຊ້ອາວຸດຍິງໂຈມຕີໂຮງສະແດງຄອນເສີດ ທີ່ເມືອງກຣາສະໂນໂກສກ, ເຂດຊານເມືອງມົດສະກູ ໃນວັນທີ 22 ມີນາ 2024 ອັນໄດ້ເຮັດໃຫ້ປະຊາຊົນຜູ້ບໍລິສຸດເສຍຊີວິດ ແລະ ໄດ້ຮັບບາດເຈັບເປັນຈຳນວນຫຼາຍ."

ຂໍໃຫ້ດວງວິນຍານຂອງຜູ້ເສຍຊີວິດໃນເຫດການດັ່ງກ່າວ ຈົ່ງໄປສູ່ສຸຄະຕິດ້ວຍເທີ້ນ.



ຄາຖາແກ້ທຸກ (ໜ້າ 9)




ຟລໍຣິດາ... (ໜ້າ 11)




ພົກແຜ່ນດິນ ປົ້ນແຜ່ນຟ້າ... (ໜ້າ 12)

# ຮອງປະທານ ສພຊ ຕ້ອນຮັບການຢ້ຽມຂໍ່ານັບຂອງຮອງຜູ້ອຳນວຍການ UNDP



(ສພຊ) - ໃນຕອນບ່າຍຂອງວັນພະຫັດທີ 28 ມີນາ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ (ສພຊ) ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ຄຣິດສະໂຕບເຟີບາຣູເອ (Christophe Bahuet) ຮອງຜູ້ອຳນວຍການອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ປະຈຳພາກພື້ນອາຊີ-ປາຊີຟິກ ພ້ອມດ້ວຍຄະນະ.

ທ່ານສົມມາດພົລເສນາ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຂອງທ່ານ ຄຣິດສະໂຕບເຟີ ບາຣູເອແລະຄະນະໃນຄັ້ງນີ້; ພ້ອມນັ້ນ, ຍັງໄດ້ໄປຢ້ຽມຢາມ, ພົບປະສະພາປະຊາຊົນແຂວງຊຽງຂວາງ ເຊິ່ງໄດ້ຮັບຮູ້ເຖິງສະພາບການ ແລະ ບັນຫາຕົວຈິງທີ່ຕິດພັນກັບວຽກງານຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ (ສພຂ). ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ອົງການ UNDP ທີ່ໄດ້ປະກອບສ່ວນສຳຄັນເຂົ້າໃນການສະໜັບສະໜູນລັດຖະບານລາວ ໃນການພັດທະນາເສດຖະກິດ, ການກໍ່ສ້າງພື້ນຖານໂຄງລ່າງ, ການພັດທະນາຊົນນະບົດ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ການພັດທະນາຊັບພະຍາກອນມະນຸດ, ການຄຸ້ມຄອງສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ, ການສະໜັບສະໜູນການເກັບກູ້ລະເບີດທີ່ບໍ່ທັນແຕກ ແລະ ຂົງເຂດອື່ນໆ; ພ້ອມນັ້ນ, ກໍໃຫ້ການຊ່ວຍເຫຼືອລັດຖະບານລາວ ຈັດຕັ້ງກອງປະຊຸມໂຕະມົນໃນໄລຍະຜ່ານມາ ເພື່ອລະດົມຂົນຂວາຍທຶນຮອນຈາກສາກົນໃນການຕອບສະໜອງຄວາມຕ້ອງການດ້ານການລົງທຶນຂອງລັດໃຫ້ແກ່ໂຄງການພັດທະນາເສດຖະກິດ-ສັງຄົມ ແນໃສ່ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs).

ອົງການສະຫະປະຊາຊາດເພື່ອການພັດທະນາ ແມ່ນໜຶ່ງໃນບັນດາຄູ່ຮ່ວມພັດທະນາ ແລະ ໄດ້ມີການຮ່ວມມືກັບສະພາແຫ່ງຊາດລາວ ມາເປັນເວລາຍາວນານ ໂດຍຜ່ານການຊຸກຍູ້ສົ່ງເສີມທາງດ້ານວິຊາການ ແລະ ການພັດທະນາອົງການ ມາຕັ້ງແຕ່ປີ 2008;

ອ່ານຕໍ່ໜ້າ 8

# ສ້າງຄວາມຮັບຮູ້ວຽກງານເສດຖະກິດດິຈິຕອນ



(ສພຊ) - ໃນລະຫວ່າງວັນທີ 04-05 ເມສາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ; ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ໄດ້ຈັດກອງປະຊຸມສຳມະນາສ້າງຄວາມຮັບຮູ້ໃນວຽກງານເສດຖະກິດດິຈິຕອນ ໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ທີ່ເປັນກຳມະການຂອງ ກສຕສ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ. ເຂົ້າຮ່ວມມີທ່ານບັນດິດ ສຈ. ບໍ່ວຽງຄຳ ວົງດາລາ ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ; ທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ພ້ອມດ້ວຍບັນດາທ່ານຮອງປະທານກຳມາທິການຂອງສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ, ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ແຂກທີ່ຖືກເຊີນ.

ທັງນີ້ ກໍເພື່ອເປັນການຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ 5 ປີ (2021-2025); ສ້າງຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ກັບວຽກງານຫັນເປັນດິຈິຕອນຂອງ ສປປ ລາວ ໃຫ້ແກ່ບັນດາທ່ານ ສສຊ; ຮັບຟັງການລາຍງານກ່ຽວກັບຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ 5 ປີ, ລາຍງານກ່ຽວກັບລະບົບການບໍລິຫານລັດດ້ວຍເອເລັກໂຕຣນິກ (E-Government) ແລະ ການຫັນເປັນລັດຖະບານດິຈິຕອນ (Digital Government), ການເຂົ້າເຖິງເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານທີ່ທັນສະໄໝ (ICTs).

ທ່ານຮອງປະທານສະພາແຫ່ງຊາດໄດ້ກ່າວເປີດກອງປະຊຸມເຊິ່ງບາງຕອນວ່າ: ໂລກຂອງເຮົາໃນປັດຈຸບັນ ໄດ້ມີການພັດທະນາດ້ານເຕັກໂນໂລຊີຢ່າງກ້າວກະໂດດ ແລະ ຫຼາຍປະເທດໃນໂລກ ກໍມີຄວາມພ້ອມກ້າວເຂົ້າສູ່ການປະຕິວັດອຸດສາຫະກຳຍຸກທີ 4 ເຊິ່ງຄວາມສຳຄັນຂອງການພັດທະນາດັ່ງກ່າວ ແມ່ນການພັດທະນາເຕັກໂນໂລຊີດິຈິຕອນເພື່ອນຳໃຊ້ເຂົ້າໃນທຸກຂະແໜງການເປັນການເຊື່ອມໂຍງ, ເຊື່ອມຈອດແລະການຕິດຕໍ່ພົວພັນຊື້-ຂາຍຢ່າງບໍ່ມີພົມແດນເຊິ່ງຫຼາຍປະເທດໃນໂລກກໍໄດ້ນຳໃຊ້ເຕັກໂນໂລຊີປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງຕົນ ໃຫ້ຂະຫຍາຍ ຕົວຢ່າງເຂັ້ມແຂງ; ໃນໄລຍະຜ່ານມາ, ລັດຖະບານ ກໍຄືກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍນິຕິກຳທີ່ກ່ຽວຂ້ອງ ເປັນຕົ້ນກົດໝາຍທີ່ຕິດພັນກັບເຕັກໂນໂລຊີ, ວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດດິຈິຕອນເຊິ່ງສະພາແຫ່ງຊາດກໍໄດ້ອອກມະຕິວ່າດ້ວຍການຮັບຮອງເອົາວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ(2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 10 ປີ (2021-2030), ແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 5 ປີ (2021-2025) ເພື່ອປະກອບສ່ວນ ເຂົ້າໃນການດັດປັບໂຄງສ້າງເສດຖະກິດຂອງປະເທດເຮົາ ໃຫ້ມີການຂະຫຍາຍຕົວຢ່າງເຂັ້ມແຂງ ເປັນການເສີມຂະຫຍາຍທ່າແຮງບົ່ມຊ້ອນຂອງປະເທດເຮົາ ດ້ວຍການນຳໃຊ້ເຕັກໂນໂລຊີທີ່ເໝາະສົມ ຕິດພັນກັບການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ເພື່ອກະກຽມຄວາມພ້ອມຮອບດ້ານໃນການນຳເອົາປະເທດຂອງພວກເຮົາຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ.

ກອງປະຊຸມໄດ້ຮັບຟັງຄວາມສຳຄັນ ແລະ ຄວາມຈຳເປັນການຫັນເປັນດິຈິຕອນຂອງ ສປປລາວ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ 5 ປີ, ການແບ່ງຄວາມຮັບຜິດຊອບລະຫວ່າງຂັ້ນສູນກາງແລະຂັ້ນທ້ອງຖິ່ນກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດດິຈິຕອນ 5 ປີ, ລະບົບການບໍລິຫານລັດດ້ວຍເອເລັກໂຕຣນິກ ແລະ ການຫັນເປັນລັດຖະບານດິຈິຕອນ, ການເຂົ້າເຖິງເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານທີ່ທັນສະໄໝ, ບາງບົດຮຽນຂອງການຫັນເປັນດິຈິຕອນຂອງ ສສ.ຫວຽດນາມ ແລະ ສິ່ງທີ່ມີຄວາມພ້ອມທີ່ສາມາດເຮັດໄດ້ຢູ່ ສປປ ລາວ, ບາງບົດຮຽນຂອງສິ່ງທີ່ສາມາດເຮັດໄດ້ ຢູ່ ສປປ ລາວ, ບາງບົດຮຽນຂອງຕ່າງປະເທດກ່ຽວກັບການພັດທະນາເສດຖະກິດດິຈິຕອນ, ການຫັນເປັນດິຈິຕອນຂອງແຮ່ທາຍາກ; ຈາກນັ້ນ, ຜູ້ເຂົ້າໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນເພື່ອແລກບົດຮຽນເຊິ່ງກັນ ແລະ ກັນ.

**(ສອນສັກ ວັນວິໄຊ)**

# ເລື່ອງເດັ່ນ ຂ່າວ ເດັດ

***# ຄັດໂດຍ: ທອມສະນິດ***

*❐ ພະຍາດໄຂ້ເລືອດດຳ ແມ່ນພະຍາດຕິດຕໍ່ທີ່ຮ້າຍແຮງ ເຊິ່ງເດືອນມີນາ 2024 ສປປ ລາວ ກວດພົບກໍລະນີສົງໄສເປັນພະຍາດໄຂ້ເລືອດດຳ 65 ກໍລະນີ ໃນນີ້, ຢູ່ແຂວງຈຳປາສັກ 54 ກໍລະນີ ຄື: ເມືອງຈຳປາສັກ 52 ກໍລະນີ ເມືອງສຸຂຸມາ 2 ກໍລະນີ ແລະ 2 ບ້ານ ຂອງເມືອງຄົງເຊໂດນ ແຂວງສາລະວັນ 11 ກໍລະນີ. ໄຂ້ເລືອດດຳ ແມ່ນພະຍາດຕິດຕໍ່ທີ່ຮ້າຍແຮງ ເຊິ່ງເກີດຈາກເຊື້ອຈຸລິນຊີທີ່ສ້າງສະປໍ ເອີ້ນວ່າ: bacillus anthracis ເປັນພະຍາດທີ່ເກີດຂຶ້ນຕາມທຳມະຊາດຢູ່ໃນດິນໃນພື້ນທີ່ສວນໃຫຍ່ຂອງໂລກ ໂດຍທົ່ວໄປພົບກະທົບຕໍ່ສັດຄ້ຽວເອື້ອງ ທັງສັດລ້ຽງ ແລະ ສັດປ່າ ເຊັ່ນ: ຄວາຍ, ງົວ ແລະ ແບ້ ສາມາດແຜ່ຈາກສັດສູ່ຄົນໄດ້ ແຕ່ປົກກະຕິແລ້ວບໍ່ແຜ່ຈາກຄົນສູ່ຄົນ ເຊື້ອຈຸລິນຊີດັ່ງກ່າວຜະລິດສານພິດທີ່ອອກລິດຮຸນແຮງ ເຮັດໃຫ້ເກີດພະຍາດຮ້າຍແຮງ ແລະ ເສຍຊີວິດທັງຄົນ ແລະ ສັດ ພະຍາດໄຂ້ເລືອດດຳໃນຄົນ ແລະສັດ ສາມາດປິ່ນປົວດ້ວຍຢາຕ້ານເຊື້ອ ທີ່ສັ່ງຈ່າຍຢາໂດຍແພດໝໍ ແລະ ສັດຕະວະແພດ ຖ້າຜູ້ທີ່ຕິດເຊື້ອພະຍາດໄຂ້ເລືອດດຳ ໄດ້ຮັບການປິ່ນປົວທາງການແພດໂດຍໄວ ຄວາມສ່ຽງຕໍ່ການເສຍຊີວິດແມ່ນມີໜ້ອຍ ສ່ວນວິທີທີ່ດີທີ່ສຸດໃນການປ້ອງກັນພະຍາດໄຂ້ເລືອດດຳໃນຄົນ ແມ່ນການຊອກຫາກໍລະນີທີ່ເຈັບປ່ວຍໃນສັດລ້ຽງຢ່າງໄວວາ ແລະ ການປະຕິບັດມາດ ຕະການຄວບຄຸມ ເພື່ອຢຸດຕິການແຜ່ລະບາດຂອງພະຍາດ.*

***ໜສພ. ວຽງຈັນໃໝ່ 28/03/2024***

*❐ ການສະເຫຼີມສະຫຼອງບຸນປີໃໝ່ລາວ ພສ. 2567 ຈະເລີ່ມແຕ່ວັນທີ 13, 14, 15, 16 ແລະ ຖືເອົາວັນທີ 17-18 ເມສາ 2024 ເປັນວັນພັກຊົດເຊີຍ ເພື່ອເຮັດໃຫ້ການສະຫຼອງບຸນປີໃໝ່ລາວ ໃນປີນີ້ເຕັມໄປດ້ວຍບັນຍາກາດເບີກບານມ່ວນຊື່ນ, ຮັກສາໄດ້ຄວາມສາມັກຄີ, ວັດທະນະທຳ, ຮີດຄອງປະເພນີ, ຂະນົບທຳນຽມອັນດີງາມຂອງລາວ, ຮັບປະກັນຄວາມສະຫງົບ, ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນທົ່ວສັງຄົມ ທັງເປັນການສົ່ງເສີມປີທ່ອງທ່ຽວລາວ 2024.*

***ໜສພ. ປະເທດລາວ 28/03/2024***

*❐ ຫ້ອງການກວດກາ ແລະ ຄວບຄຸມຢາເສບຕິດ ກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບ ໃຫ້ຮູ້ວ່າ: ໃນປີ 2023 ມີຜູ້ເຂົ້າຮັບການບຳບັດປິ່ນປົວຢາເສບຕິດ 7.229 ຄົນ ຍິງ 301 ຄົນ ໃນນີ້, ມີຜູ້ທີ່ປິ່ນປົວດີແລ້ວກັບຄືນບ້ານ 4.567 ຄົນ ຍິງ 204 ຄົນ ສືບຕໍ່ປິ່ນປົວ 2.662 ຄົນ ຍິງ 97 ຄົນ; ພ້ອມນັ້ນ, ກໍຍັງມີສູນວິໄຈຢາເສບຕິດແຂວງອຸດົມໄຊແລະແຂວງຈຳປາສັກເຊິ່ງໃນປີ 2023 ໄດ້ວິໄຈຕົວຢ່າງຢາເສບຕິດ ໄດ້ 2.271 ຕົວຢ່າງ.*

***ໜສພ. ວຽງຈັນໃໝ່ 28/03/2024***

# ການນຳສະພາແຫ່ງຊາດ ມີຄຳເຫັນໂອ້ລົມບັນດາເລຂານຸການ



(ສພຊ) - ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງດ້ານການເກັບກຳຂໍ້ມູນ, ສັງລວມ ແລະຂຶດຂຽນເອກະສານໃຫ້ແກ່ບັນດາເລຂານຸການການນຳສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທີ່ໄດ້ຈັດຂຶ້ນໃນລະຫວ່າງວັນທີ 29-30 ມີນາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ; ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການຄະນະປະຈຳສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງມີບາງຕອນວ່າ: ເລຂານຸການການນຳແມ່ນຜູ້ທີ່ໃກ້ຊິດຕິດແທດການນຳ, ເຮັດໜ້າທີ່ເປັນເສນາທິການຮອບດ້ານ ແລະ ຮັບໃຊ້ການນຳເປັນຕົ້ນແມ່ນການຄົ້ນຄວ້າເນື້ອໃນ, ສົມທົບກັບພາກສ່ວນກ່ຽວຂ້ອງ ຮ່າງບົດຄຳເຫັນຕ່າງໆ, ການສ້າງແຜນການເຄື່ອນໄຫວ, ຄົ້ນຄວ້າສັງລວມສະພາບການ ແລະ ວຽກບໍລິຫານ-ປະສານສົມທົບກັບພາກສ່ວນຕ່າງໆ ໃນການກະກຽມໃຫ້ແກ່ການເຄື່ອນໄຫວຂອງການນຳ ທັງເພື່ອໃຫ້ການນຳສາມາດນຳພາ-ຊີ້ນຳການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ-ລັດ ໃຫ້ປາກົດຜົນເປັນຈິງ; ຖ້າເລຂານຸການການນຳເຮັດວຽກໄດ້ດີ ພາລະໃນການແບກຫາບວຽກງານການເມືອງຂອງການນຳ ກໍຈະເບົາລົງ ແລະ ຄ່ອງຕົວ, ທຸກພາກສ່ວນພາຍໃຕ້ບັງຄັບບັນຊາຂອງການນຳ ກໍຈະເຄື່ອນໄຫວວຽກງານໄດ້ສະດວກ, ມີປະສິດທິພາບໃນການຫັນແນວທາງນະໂຍບາຍຂອງພັກ-ລັດ ໃຫ້ເກີດຜົນຕົວຈິງກໍຈະສູງຂຶ້ນ, ແຕ່ຫາກເລຂານຸການການນຳເຮັດວຽກງານບໍ່ໄດ້ດີ ກໍຈະເປັນສ່ວນໜຶ່ງທີ່ອາດເຮັດໃຫ້ແນວທາງນະໂຍບາຍຂອງພັກ-ລັດທີ່ວາງອອກ ບໍ່ໄດ້ຮັບໝາກຜົນຕາມຄາດໝາຍທີ່ວາງໄວ້.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ຍັງມີຄຳເຫັນ ເນັ້ນຕື່ມບາງບັນຫາຄື:

1. ບັນດາເລຂານຸການການນຳ ຈະຕ້ອງໄດ້ຮັບການອົບຮົມການເມືອງ-ແນວຄິດຢ່າງປົກກະຕິ, ດ້ວຍຫຼາຍຮູບແບບ; ເຂົ້າຮ່ວມເຝິກອົບຮົມ, ສຳມະນາຍົກລະດັບວຽກງານເລຂານຸການ, ການສ້າງເອກະສານ ແລະ ວິຊາສະເພາະດ້ານຕ່າງໆ.

2. ເລຂານຸການການນຳຈະຕ້ອງໄດ້ເອົາໃຈໃສ່ສ້າງແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມາເປັນແຜນການເຄື່ອນໄຫວນຳພາ-ຊີ້ນຳຂອງການນຳຕໍ່ກົງຈັກເສນາທິການທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຂັ້ນເທິງຕົນ ແລະ ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດແຜນການໃຫ້ດຳເນີນໄປຢ່າງປົກກະຕິ, ມີການສະຫຼຸບສັງລວມການເຄື່ອນໄຫວວຽກງານຕາມແຜນການທີ່ວາງໄວ້; ເຮັດວຽກຕາມການຊີ້ນຳຂອງການນຳ, ຕາມລະບອບລະບຽບການ, ມີຄວາມເປັນເຈົ້າການ ແລະ ປະດິດສ້າງໃນການເຄື່ອນໄຫວວຽກງານທີ່ໄດ້ຮັບມອບໝາຍ.

3. ບັນດາເລຂານຸການການນຳຕ້ອງໄດ້ເອົາໃຈໃສ່ພັດທະນາຕົນເອງຢູ່ສະເໝີ, ຕ້ອງດຸໝັ່ນໃນການຄົ້ນຄວ້າຮ່ຳຮຽນເອກະສານຕ່າງໆຂອງພັກ-ລັດເພື່ອປະກອບຄວາມຮູ້ໃໝ່ໆໃຫ້ຕົນເອງເລື້ອຍໆ; ຄົ້ນຄວ້າ, ວິເຄາະ, ວິໄຈ, ສັງລວມ ແລະ ເກັບກຳຂໍ້ມູນຂ່າວສານຢ່າງເປັນລະບົບ ເພື່ອຮັບໃຊ້ວຽກງານດ້ານເນື້ອໃນ ເຊິ່ງເປັນວຽກງານທີ່ຈະຕ້ອງໄດ້ຊ່ວຍການນຳ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງການນຳມີປະສິດທິຜົນນັບມື້ສູງຂຶ້ນ; ອີກດ້ານໜຶ່ງ, ໃນອະນາຄົດຂ້າງໜ້າ ຖ້າຕົນເອງໄດ້ຮັບໜ້າທີ່ວຽກງານສູງຂຶ້ນ ກໍຈະມີບົດຮຽນດ້ານການກະກຽມເອກະສານໃນວຽກງານທີ່ຕົນຮັບຜິດຊອບ. ນອກຈາກການພັດທະນາວຽກງານດ້ານເອກະສານແລ້ວ, ຈຳເປັນຕ້ອງໄດ້ພັດທະນາຄວາມຮູ້ວິຊາສະເພາະດ້ານຕ່າງໆຕື່ມອີກ ໂດຍສະເພາະວຽກງານຂົງເຂດສະພາແຫ່ງຊາດ, ດ້ານກົດໝາຍ, ພາສາຕ່າງປະເທດ ເພື່ອຮັບປະກັນການປະຕິບັດໜ້າທີ່ເລຂານຸການການນຳ ມີຄຸນນະພາບນັບມື້ດີຂຶ້ນ.

4. ການປະສານງານເປັນໜ້າທີ່ສຳຄັນອັນໜຶ່ງຂອງເລຂານຸການການນຳ ເນື່ອງຈາກວ່າເລຂານຸການເປັນຂົວຕໍ່ລະຫວ່າງພາກສ່ວນອື່ນກັບການນຳ; ຖ້າມີການປະສານງານທີ່ດີ, ໂລ່ງລ່ຽນ ກໍຈະເຮັດໃຫ້ການລາຍງານ, ການມີທິດຊີ້ນຳ, ການຈັດຕັ້ງຜັນຂະຫຍາຍທິດຊີ້ນຳ ເຂົ້າໃນວຽກງານຕ່າງໆໄດ້ຮັບຜົນສຳເລັດທັນເວລາ. ການປະສານງານລະຫວ່າງເລຂານຸການການນຳສະພາແຫ່ງຊາດ ກັບກົງຈັກເສນາທິການຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຍິ່ງມີຄວາມສຳຄັນຫຼາຍ ແລະ ເປັນປັດໄຈຕັດສິນຜົນສຳເລັດຂອງວຽກງານ; ນອກຈາກນັ້ນ, ຖືສຳຄັນການປະສານງານກັບພາກສ່ວນກ່ຽວຂ້ອງຢູ່ກະຊວງ-ອົງການທຽບເທົ່າຢູ່ສູນກາງ ແລະທ້ອງຖິ່ນ. ສະນັ້ນ, ເລຂານຸການຈະຕ້ອງໄດ້ຍົກສູງຄຸນນະພາບໃນການປະສານງານ, ການວາງແຜນການໃນການເຄື່ອນໄຫວໃຫ້ເປັນລະບົບແລະຄົບຊຸດທັງແຜນວຽກ, ແຜນຄົນ, ແຜນງົບປະມານ, ແຜນສິ່ງອຳນວຍຄວາມສະດວກ ເພື່ອຮັບປະກັນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຮັບຜົນສຳເລັດທັນເວລາ.

5. ບັນຫາຢາກໃຫ້ເອົາໃຈໃສ່ຕື່ມ ແມ່ນຫ້າມເລຂານຸການເປັນທີ່ປຶກສາ, ຫ້າມສວຍໃຊ້ອຳນາດອອກຄຳສັ່ງຕໍ່ອົງການ ຖ້າບໍ່ໄດ້ຮັບການມອບສິດຈາກການນຳ, ໜ້າທີ່ ແລະ ຕຳແໜ່ງຂອງຕົນ ຫຼື ຜ່ານບຸກຄົນໃດໜຶ່ງກະທຳສິ່ງບໍ່ດີ, ບໍ່ຖືກ ຕ້ອງຕາມລະບຽບແລະກົດໝາຍ, ບໍ່ແອບອ້າງບົດບາດຂອງອຳນາດຂອງຜູ້ນຳ ເພື່ອຜົນປະໂຫຍດສ່ວນຕົວ ເຊິ່ງເປັນການສ້າງຄວາມເສື່ອມເສຍຕໍ່ອິດທິພົນຂອງການນຳ; ຫ້າມສ້າງກຸ່ມກ້ອນພັກພວກ ແລະກະທຳສິ່ງໃດໆທີ່ກໍ່ໃຫ້ເກີດຜົນກະທົບທີ່ບໍ່ດີເຖິງການປະຕິບັດໜ້າທີ່ວຽກງານແລະຄວາມສາມັກຄີພາຍໃນການຈັດຕັ້ງ. ນອກຈາກນັ້ນ, ໃຫ້ເອົາໃຈໃສ່ການຮັກສາຄວາມລັບ ເນື່ອງຈາກເລຂານຸການການນຳ ເປັນຜູ້ຮັບໃຊ້ວຽກງານຢ່າງໃກ້ຊິດກັບການນຳ ບໍ່ວ່າການບໍລິການຮັບໃຊ້ ກໍຄືການຮັບ ແລະ ຈັດເກັບບັນດາເອກະສານ ຈຶ່ງເປັນຜູ້ທີ່ຮູ້ຄວາມລັບຂອງວຽກງານ ຈະເປັນຄວາມລັບຂອງຊາດ, ຂອງລັດ ແລະ ຂອງອົງການ.

**(ນາງ ປາກາລັກ ພົມມີໄຊ)**

# ປະທານ ກວທສ ຕ້ອນຮັບກຳມະການຂອງ ກຳມາທິການສຸຂະພາບ ແລະ ສະຫວັດດີການສັງຄົມ



(ສພຊ) - ຕອນບ່າຍຂອງວັນອັງຄານທີ 26 ມີນາ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ໄດ້ຕ້ອນຮັບທ່ານ ນາງ ຊູ ຈຸງ ຊຸກ (Suh Jung Sook) ກຳມະການຂອງກຳມາທິການສຸຂະພາບແລະສະຫວັດດີການສັງຄົມ, ສະພາແຫ່ງຊາດສາທາລະນະລັດເກົາຫຼີພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມແລະເຮັດວຽກຢູ່ສປປລາວ.

ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນພ້ອມທັງຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີ

ອ່ານຕໍ່ໜ້າ 8

# ລະດົມແນວຄິດໃສ່ຮ່າງນິຕິກຳຂອງ ຄປຈສພຊ

(ສພຊ) - ເພື່ອເຮັດໃຫ້ວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ; ລະຫວ່າງວັນທີ 30 ມີນາ - 02 ເມສາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ, ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມລະດົມແນວຄິດໃສ່ຮ່າງນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ແລະ ຮ່າງປຶ້ມຄູ່ມືກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ (ຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ) ພາຍໃຕ້ການເປັນປະທານຂອງທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍໂດຍມີບັນດາທ່ານປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເລຂາທິການສະພາປະຊາຊົນແຂວງຫຼວງພະບາງ ແລະ ແຂວງຄຳມ່ວນ ພ້ອມດ້ວຍບັນດາທ່ານຫົວໜ້າກົມ, ຮອງຫົວໜ້າກົມ, ຄະນະພະແນກ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງຂອງສະພາແຫ່ງຊາດເຂົ້າຮ່ວມ.

ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳເຫັນ ແລະ ແລກປ່ຽນບົດຮຽນໃນການປະຕິບັດຕົວຈິງຂອງທ້ອງຖິ່ນ ເພື່ອເຮັດໃຫ້ຮ່າງນິຕິກຳຂອງ ຄປຈສພຊ ແລະ ຮ່າງປຶ້ມຄູ່ມືດັ່ງກ່າວສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີຄວາມຊັດເຈນ ແລະ ເປັນເອກະພາບຕໍ່ກັບວຽກງານດັ່ງກ່າວ; ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກມູນນິທິ ເວສທ໌ມິນສ໌ເທີເພື່ອປະຊາທິປະໄຕ (Westminster Foundation for Democracy - WFD).

**(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)**

# ຍົກລະດັບການເກັບກຳຂໍ້ມູນ, ສັງລວມ ແລະ ຂຶດຂຽນເອກະສານ



(ສພຊ) - ເພື່ອຍົກລະດັບໃຫ້ແກ່ພະນັກງານທີ່ເປັນເລຂານຸການຂອງບັນດາການນຳ ມີຄວາມຮູ້, ຄວາມສາມາດ, ເສີມສ້າງທັກສະບຸກຄະລິກກະພາບ ໃນການປະກອບສ່ວນເຮັດໜ້າທີ່ວຽກງານທີ່ກ່ຽວຂ້ອງໃຫ້ສົມບູນ ແລະ ຕອບສະໜອງການປະຕິບັດໜ້າທີ່ວຽກງານດັ່ງກ່າວໄດ້ຮັບຜົນດີ, ມີປະສິດທິພາບ, ປະສິດທິຜົນດີຍິ່ງໆຂຶ້ນ; ຄະນະເລຂາທິການສະພາແຫ່ງຊາດ ຈຶ່ງໄດ້ຈັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງດ້ານການເກັບກຳຂໍ້ມູນ, ສັງລວມ ແລະ ຂຶດຂຽນເອກະສານ ໃຫ້ແກ່ບັນດາເລຂານຸການການນຳພາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນລະຫວ່າງ

ອ່ານຕໍ່ໜ້າ 8

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

(ສພຊ) - ລະຫວ່າງວັນທີ 28-30 ມີນາ 2024 ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປ ລາວ ນຳໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ສືບຕໍ່ຢ້ຽມຢາມ ແລະ ເຮັດວຽກຢູ່ສາທາລະນະລັດຝຣັ່ງ ພາຍຫຼັງສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 148 ທີ່ເມືອງເຈນີວາ, ສະມາພັນທະລັດສະວິດ; ການເຄື່ອນໄຫວຄັ້ງນີ້ມີຈຸດປະສົງເພື່ອປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສອງປະເທດລາວ-ຝຣັ່ງ ກໍຄືລະຫວ່າງສອງອົງການນິຕິບັດຍັດ ໃຫ້ນັບມື້ນັບໄດ້ຮັບການເສີມຂະຫຍາຍ.

ໃນວັນທີ 28 ມີນາ 2024 ທ່ານຮອງປະທານສະພາແຫ່ງຊາດລາວ ພ້ອມຄະນະ ໄດ້ເຮັດວຽກກັບທ່ານປະທານຄະນະມິດຕະພາບລັດຖະສະພາຝຣັ່ງກັບ ລາວ-ກຳປູເຈຍ ຂອງສະພາສູງຝຣັ່ງ ແລະ ເຮັດວຽກກັບທ່ານປະທານຄະນະມິດຕະພາບລັດຖະສະພາຝຣັ່ງ-ລາວ ຂອງສະພາແຫ່ງຊາດຝຣັ່ງ; ການພົບປະເຮັດວຽກຄັ້ງນີ້, ສອງຝ່າຍໄດ້ຕີລາຄາຄືນການພົວພັນຮ່ວມມືລະຫວ່າງສອງປະເທດ ລວມທັງສອງອົງການນິຕິບັດຍັດ ເຊິ່ງເຫັນວ່າໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ສະແດງອອກມີແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆນຳກັນ. ສ.ຝຣັ່ງ ໄດ້ໃຫ້ການຊ່ວຍເຫຼືອ ສປປ ລາວ ໃນຫຼາຍຂະແໜງການ ເປັນຕົ້ນແມ່ນດ້ານສາທາລະນະສຸກ, ກະສິກຳ, ພັດທະນາຊົນນະບົດ, ວັດທະນະທຳ, ພັດທະນາຕົວເມືອງແລະການຊ່ວຍເຫຼືອດ້ານການສຶກສາ; ນອກຈາກນີ້, ຝຣັ່ງໄດ້ຊ່ວຍເຫຼືອສປປລາວໃນຖານະເປັນປະເທດສະມາຊິກຂອງອົງການຝຣັ່ງໂກໂຟນີໂດຍຜ່ານອົງການຝຣັ່ງເພື່ອການພັດທະນາ (AFD), ກອງທຶນບຸລິມະສິດພິເສດ (FSP) ແລະ ໃຫ້ການຊ່ວຍເຫຼືອທັງໃນຮູບແບບຫຼາຍຝ່າຍແລະຜ່ານສະຖານທູດຝຣັ່ງໂດຍກົງ. ພ້ອມດຽວກັນນີ້, ສອງຝ່າຍ ຍັງໄດ້ປຶກສາຫາລືເພື່ອຊອກຫາຊ່ອງທາງໃນການພົວພັນຮ່ວມມື ເປັນຕົ້ນແມ່ນການແລກປ່ຽນຄະນະຜູ້ແທນລະຫວ່າງສອງປະເທດ ກໍຄືສອງສະພາ, ສືບຕໍ່ພົວພັນຮ່ວມມືໃນຂົງເຂດທີ່ມີທ່າແຮງນຳກັນ.

ໃນວັນດຽວກັນນີ້, ທ່ານສົມຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດສະພາແຫ່ງຊາດ ແຫ່ງ ສປປ ລາວ ກໍໄດ້ພົບປະກັບທ່ານ Bourlanges ປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ແຫ່ງ ສ.ຝຣັ່ງເຊິ່ງສອງຝ່າຍໄດ້ປຶກສາຫາລືທິດທາງການຮ່ວມມືລະຫວ່າງສອງອົງການນິຕິບັນຍັດໃນຕໍ່ໜ້າ ເປັນຕົ້ນສືບຕໍ່ແລກປ່ຽນຄະນະຜູ້ແທນທີ່ຕິດພັນກັບການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດດ້ານນິຕິບັນຍັດ;ສືບຕໍ່ຊຸກຍູ້ໃຫ້ມີການເຂົ້າຮ່ວມໂຄງການສ້າງຄວາມເຂັ້ມແຂງ ແລະ ການເຝິກອົບຮົມໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະພະນັກງານວິຊາການ ທີ່ລັດຖະສະພາຝຣັ່ງໃຫ້ທຶນສະໜັບສະໜູນ; ຊຸກຍູ້ ແລະ ສົ່ງເສີມໃຫ້ລັດຖະບານທັງສອງປະເທດ ສືບຕໍ່ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ບັນດາໂຄງການຮ່ວມມືສອງຝ່າຍໄດ້ຕົກລົງນຳກັນ; ຊຸກຍູ້ໃຫ້ສອງປະເທດມີການລົງທຶນແລະຄ້າຂາຍນຳກັນໃຫ້ຫຼາຍຂຶ້ນກວ່າເກົ່າ; ພົວພັນແລະຮ່ວມມືໃນການເຄື່ອນໄຫວວຽກງານຢູ່ເວທີລັດຖະສະພາພາກພື້ນແລະສາກົນ. ຝ່າຍລາວຍັງໄດ້ແຈ້ງໃຫ້ຝ່າຍຝຣັ່ງຊາບວ່າລະຫວ່າງວັນທີ 08-12 ເມສານີ້ ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມກຳມາທິການວຽກງານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ທີ່ແຂວງຫຼວງພະບາງ ແລະ ໃນເດືອນຕຸລາ 2024 ສປປລາວ ຈະເປັນປະທານ ແລະເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ແລະ ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ທີ່ນະຄອນຫຼວງວຽງຈັນ.

ນອກນັ້ນ, ຄະນະຍັງໄດ້ໄປຢ້ຽມຢາມພື້ນຖານການຜະລິດ ແລະ ວັດທະນະທຳຈຳນວນໜຶ່ງຢູ່ນະຄອນຫຼວງປາຣີ.

ໃນຕອນຄ່ຳຂອງວັນທີ 30 ມີນາ 2024 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ກໍໄດ້ພົບປະໂອ້ລົມກັບຄະນະສຳພັນຄົນລາວແລະຄົນເຊື້ອສາຍລາວຫຼາຍກວ່າ 60 ຄົນ ຢູ່ສະຖານທູດລາວປະຈຳປາຣີ ເພື່ອແຈ້ງໃຫ້ພີ່ນ້ອງຄົນເຊື້ອຊາດລາວທີ່ອາໄສຢູ່ປະເທດຝຣັ່ງຊາບກ່ຽວກັບສະພາບອັນພົ້ນເດັ່ນໃນການພັດທະນາເສດຖະກິດ-ສັງຄົມຂອງລາວໃນໄລຍະຫຼັງໆມານີ້ ແລະໄດ້ຢືນຢັນຄືນກ່ຽວກັບນະໂຍບາຍຂອງສປປລາວເຊິ່ງຍາມໃດກໍຖືວ່າເອົາພີ່ນ້ອງຊາວລາວທີ່ດຳລົງຊີວິດຢູ່ຕ່າງປະເທດເປັນວົງຄະນາຍາດອັນດຽວທີ່ບໍ່ສາມາດຕັດແຍກອອກຈາກວົງຄະນາຍາດແຫ່ງຊາດໄດ້ ພ້ອມທັງສະແດງຄວາມຊົມເຊີຍ, ຕີລາຄາສູງຕໍ່ການເຄື່ອນໄຫວຂອງພີ່ນ້ອງຄົນເຊື້ອຊາດລາວຢູ່ຝຣັ່ງ ທີ່ຍາມໃດກໍໄດ້ມີການປະຕິບັດກົດໝາຍຂອງປະເທດເຈົ້າພາບ ແລະ ມີການອວ່າຍໜ້າມາຫາບ້ານເກີດເມືອງນອນເພື່ອປະກອບສ່ວນໃນການພັດທະນາປະເທດຊາດນັບມື້ນັບຫຼາຍ.

## ສຳມະນາ...

(ຕໍ່ຈາກໜ້າ 1)

ປະທານ-ຮອງປະທານສະພາປະຊາຊົນແຂວງ (ສພຂ) ແລະຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍບັນດາທ່ານຫົວໜ້າຫ້ອງການ, ຫົວໜ້າກົມ, ຮອງຫົວໜ້າກົມ ຈາກບັນດາກະຊວງ, ອົງການທີ່ກ່ຽວຂ້ອງ; ບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ.

ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນກ່າວເປີດ ເຊິ່ງມີບາງຕອນວ່າ: ໂດຍອີງຕາມໜັງສືສະເໜີຈາກທ່ານນາຍົກລັດຖະມົນຕີ ເຖິງປະທານສະພາແຫ່ງຊາດສະບັບເລກທີ 10/ລບ, ລົງວັນທີ 30 ມັງກອນ 2024 ກ່ຽວກັບການສະເໜີພິຈາລະນາອອກມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ໃນການຍົກເວັ້ນມາດຕາ 44 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງປີ 2019 ເພື່ອໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສາມາດອອກໃບຕາດິນສຳລັບທີ່ດິນປຸກສ້າງຖາວອນ ແລະ ທີ່ດິນກະສິກຳຖາວອນ ທີ່ໄດ້ນຳໃຊ້ກ່ອນການປະກາດເປັນທີ່ດິນປ່າໄມ້ ທັງເປັນບ່ອນອີງໃນການລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດໃນມໍ່ໆນີ້; ດັ່ງນັ້ນ, ຈຶ່ງໄດ້ຈັດກອງປະຊຸມສຳມະນາລະດັບສູງຄັ້ງນີ້ຂຶ້ນ.

ໃນວາລະດຳເນີນກອງປະຊຸມ, ໄດ້ຮັບຟັງການລາຍງານຫຍໍ້ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ຈາກທ່ານລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ທ່ານຮອງລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້; ລາຍງານທາງດ້ານເຕັກນິກວິຊາການຈາກກົມປ່າໄມ້ ກ່ຽວກັບສະພາບການນຳໃຊ້ທີ່ດິນຢູ່ໃນເຂດທີ່ດິນປ່າໄມ້ທົ່ວປະເທດລວມທັງບັນດາເງື່ອນໄຂໃນການອອກໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ສັນຍາຄຸ້ມຄອງປ່າໄມ້ບ້ານແລະຮ່າງແຜນດຳເນີນງານແຫ່ງຊາດກ່ຽວກັບການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ເພື່ອເປັນບ່ອນອີງໃນການນຳສະເໜີບັນດາຄູ່ຮ່ວມພັດທະນາສະໜັບສະໜູນດ້ານການເງິນ ຈຳນວນ 39 ລ້ານໂດລາເຊິ່ງຈະໄດ້ນຳສະເໜີຕໍ່ກອງປະຊຸມສາກົນ ທີ່ຈະຈັດຂຶ້ນໃນເດືອນພຶດສະພານີ້ ຢູ່ວໍຊິງຕັນ, ສະຫະລັດອາເມລິກາ; ລາຍງານຈາກກົມທີ່ດິນ ກ່ຽວກັບຜົນການເຮັດທົດລອງຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ຢູ່ແຂວງຫົວພັນ, ໄຊຍະບູລີ, ຄຳມ່ວນ ແລະ ຄວາມຄືບໜ້າການສ້າງນິຕິກຳໃນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້. ຫຼັງຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມ ໄດ້ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ຍົກໃຫ້ເຫັນບັນຫາຕົວຈິງຢູ່ແຕ່ລະທ້ອງຖິ່ນຂອງຕົນ ພ້ອມທັງເຫດຜົນທາງດ້ານວິຊາການບົນພື້ນຖານຄວາມສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ເພື່ອມີຂໍ້ມູນທີ່ໜັກແໜ້ນໃນການນຳສະເໜີຂໍການພິຈາລະນາຈາກ ຄປຈສພຊ ຕາມການສະເໜີຂອງທ່ານນາຍົກລັດຖະມົນຕີ.

**(ສອນສັກ ວັນວິໄຊ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ພາແຫ່ງຊາດ (ສພຊ) ຊຸດທີ IX ເຊິ່ງມີ: ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍສະຫະກອນ (ສະບັບສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອດ໌ໄອວີ/ພະຍາດເອດ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສະບັບສ້າງໃໝ່); ລາຍງານແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານກ່ຽວກັບການສະເໜີຂໍຫັນປ່ຽນປະເພດທີ່ດິນປ່າໄມ້ທຳມະຊາດໄປເປັນທີ່ດິນອຸດສາຫະກຳລັກສະນະຊົ່ວຄາວ ເພື່ອນຳໃຊ້ເຂົ້າໃນໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ແລະ ແຮ່ຄຳ ຢູ່ເຂດບ້ານນາອຸດົມໃຕ້ ເມືອງແມດ ແຂວງວຽງຈັນ; ລາຍງານກ່ຽວກັບແຜນການຈັດກອງປະຊຸມເຝິກອົບຮົມການເປັນວິທະຍາກອນໃຫ້ແກ່ບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ນອກນັ້ນ, ຍັງໄດ້ຮັບຟັງການລາຍງານການຄົ້ນ ຄວ້າຄຳຮ້ອງຂໍຄວາມເປັນທຳຈຳນວນໜຶ່ງ.

**(ຂ່າວ: ນາງ ກຸກກິກ ບຸດດາໄຊ, ພາບ: ສອນສັກ ວັນວິໄຊ)**

## ມອບ-ຮັບ...

(ຕໍ່ຈາກໜ້າ 1)

ທິການ ແລະ ຄະນະສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ບັນດາທ່ານຕາງໜ້າຈາກຫ້ອງວ່າການສູນກາ ພັກ, ຄະນະຈັດຕັ້ງສູນກາງພັກ, ບັນດາກະຊວງ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫ້ອງວ່າການສຳນັກງານປະທານປະເທດ ພ້ອມດ້ວຍຄະນະກົມແລະພະນັກງານພາຍໃນ ສພຊ ຈຳນວນໜຶ່ງ.

ໃນພິທີ, ທ່ານ ນາງ ປິ່ງຄຳລາຊະສິມມາກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ ໄດ້ລາຍງານໂດຍຫຍໍ້ການປະຕິບັດໜ້າທີ່ຂອງຄະນະເລຂາທິການສະພາແຫ່ງຊາດ (ຄລສ) ນັບແຕ່ເດືອນມີນາ 2021 ຫາ ເດືອນມີນາ 2024 ແລະ ຄາດຄະເນທິດທາງແຜນການຮອດປີ 2025; ທ່ານ ຮສ. ປອ. ລິນຄຳດວງສະຫວັນກຳມະການສຳຮອງສູນກາງພັກ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ລາຍງານ ໂດຍຫຍໍ້ການປະຕິບັດໜ້າທີ່ຂອງ ກສຕສ ນັບແຕ່ເດືອນມີນາ 2021 ຫາເດືອນມີນາ 2024 ແລະຄາດຄະເນທິດທາງແຜນການຮອດປີ 2025; ທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 15/ຄປຈ, ລົງວັນທີ 05 ມີນາ 2024 ວ່າດ້ວຍການຍົກຍ້າຍພະນັກງານໄປຮັບໜ້າທີ່ໃໝ່. ຫຼັງຈາກນັ້ນ, ກໍໄດ້ມີພິທີລົງນາມມອບ-ຮັບໜ້າທີ່ລະຫວ່າງຜູ້ເກົ່າ ກັບຜູ້ໃໝ່ ຄື: ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ (ຜູ້ເກົ່າ) ຖືກມອບໝາຍໜ້າທີ່ໄປເປັນປະທານ ກສຕສ (ຜູ້ໃໝ່) ແລະ ທ່ານ ຮສ. ປອ. ລິນຄຳດວງສະຫວັນ ປະທານ ກສຕສ (ຜູ້ເກົ່າ) ຖືກມອບໝາຍໜ້າທີ່ໄປເປັນເລຂາທິການສະພາແຫ່ງຊາດ (ຜູ້ໃໝ່).

ໃນພິທີມອບ-ຮັບໜ້າທີ່, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມເຊິ່ງກ່ອນອື່ນທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດຂອງສອງທ່ານທີ່ຍາດມາໄດ້ໃນໄລຍະຜ່ານມາ. ການມອບ-ຮັບໜ້າທີ່ຄັ້ງນີ້ເປັນການຜັນຂະຫຍາຍຄຳແນະນຳສະບັບເລກທີ 13/ຄຈສພ, ລົງວັນທີ 11 ມັງກອນ 2024 ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການເລືອກເຟັ້ນ, ແຕ່ງຕັ້ງ, ສັບປ່ຽນໜ້າທີ່ຂອງພະນັກງານນຳພາ-ຄຸ້ມຄອງ ທີ່ໄດ້ລະບຸໄວ້ໃນມາດຕາ 3 ຂໍ້ 3 ກ່ຽວກັບການຮັບປະກັນພາວະເຄື່ອນເໜັງແມ່ນການໝູນວຽນສັບປ່ຽນໜ້າທີ່, ການດຳລົງຕຳແໜ່ງຈາກບ່ອນເກົ່າໄປຮັບຜິດຊອບໜ້າທີ່ໃໝ່ ແລະ ຕຳແໜ່ງຢູ່ບ່ອນໃໝ່ຕາມຄວາມຮຽກຮ້ອງຂອງໜ້າທີ່ການເມືອງ ທັງເປັນການດຸ່ນດ່ຽງກຳລັງທາງດ້ານຈຳນວນ ແລະຄຸນນະພາບຂອງພະນັກງານຂະແໜງການ ແລະ ທ້ອງຖິ່ນ; ການເຄື່ອນເໜັງຍັງແມ່ນລັກສະນະທົ່ວໄປ ແລະ ປົກກະຕິຂອງວຽກງານພະນັກງານ ເພື່ອສ້າງເງື່ອນໄຂໃຫ້ພະນັກງານໄດ້ເຝິກຝົນ, ທົດສອບໃນພຶດຕິກຳຕົວຈິງຢ່າງຮອບດ້ານ, ມີຄວາມຊຳນານງານ, ສ້າງຖັນແຖວພະນັກງານໃຫ້ສົມຄູ່ກັບໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ ເຮັດໜ້າທີ່ໃຫ້ການຈັດຕັ້ງຢູ່ແຕ່ລະຂັ້ນ ແລະ ຂະແໜງການຕ່າງໆມີສະຖຽນລະພາບ, ມີການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີປະສິດທິພາບ. ການດຳເນີນພິທີຄັ້ງນີ້ແມ່ນຢູ່ໃນທ່າມກາງທີ່ ທົ່ວພັກ-ທົ່ວລັດ ພວມສືບຕໍ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ການເລັ່ງແກ້ໄຂສະພາບເສດຖະກິດ-ການເງິນຂອງປະເທດ ໂດຍສະເພາະອັດຕາເງິນເຟີ້, ບັນຫາສິນຄ້າລາຄາສູງແລະບັນຫາອື່ນໆພ້ອມດຽວກັນ ນັ້ນ ກໍໄດ້ນຳພາ-ຊີ້ນຳແຕ່ລະພາກສ່ວນ ກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ; ສຳລັບສະພາແຫ່ງຊາດ ກຳລັງສຸມໃສ່ການຕິດຕາມກວດກາບັນດາເນື້ອໃນສຳຄັນຈຳນວນໜຶ່ງ, ການຊຸກຍູ້ພາກສ່ວນຕ່າງໆໃນການເຜີຍແຜ່ຜົນສຳເລັດບັນດາມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX, ການໂຄສະນາ ແລະ ນຳເອົາຮ່າງກົດໝາຍຂົງເຂດຂອງສະພາແຫ່ງຊາດ ໄປທາບທາມຕໍ່ເປົ້າໝາຍຕ່າງໆທັງສູນກາງ ແລະທ້ອງຖິ່ນໃນຂອບເຂດທົ່ວປະເທດຢ່າງ ເປັນຂະບວນການແລະຕິດພັນກັບການລົງພົບປະຜູ້ມີສິດເລືອກຕັ້ງຂອງຕົນ ໃນຖານະເປັນອົງການຕົວແທນ ແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ສພຊ ທາບທາມກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດ ຢູ່ແຂວງວຽງຈັນ




(ສພຊ) - ໃນລະຫວ່າງ ວັນທີ 27-28 ມີນາ 2024 ນີ້, ທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງວຽງຈັນ ໄດ້ຈັດກອງປະຊຸມ ທາບທາມກົດໝາຍ 3 ສະບັບ (ໃນຂົງເຂດສະພາແຫ່ງຊາດ); ໂດຍການເປັນປະທານຮ່ວມຂອງ ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ແລະ ທ່ານ ບຸນສອນ ເຜັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ເຂົ້າຮວມມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ10 ແລະສະມາຊິກສະພາປະຊາຊົນແຂວງວຽງຈັນ ພ້ອມດ້ວຍພະນັກງານວິຊາການ.

ທ່ານ ອຳໄພ ຈິດມະນີ ຮອງປະທານກຳມະທິການກົດໝາຍ ສະພາແຫ່ງຊາດ ໄດ້ຜ່ານຮ່າງກົດໝາຍ ສະພາແຫ່ງຊາດ ສະບັບປັບປຸງ, ຮ່າງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ຮູ້ເນື້ອໃນ, ຈຸດປະສົງກົດໝາຍສະບັບນີ້ ເປັນການກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນ່ໃສ່ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ສືບຕໍ່ສ້າງ ແລະ ປັບປຸງອຳນາດລັດໃຫ້ມີຄວາມເຂັ້ມແຂງ,ປະກອບສ່ວນເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ ເຊິ່ງຮ່າງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ປະກອບມີ 9 ພາກ, ມີ 105 ມາດຕາ,ເຊິ່ງມີການປັບປຸງ 13 ມາດຕາຄື: ມາດຕາ 2, 3, 8, 12, 14, 17, 25, 29, 30, 34, 38, 59 ແລະ ມາດຕາ 88 ສ່ວນຮ່າງກົດຫມາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ປະກອບມີ 9 ພາກ,ມີ 97 ມາດຕາ, ເຊິ່ງມີການປັບປຸງຄືກັນກັບກົດໝາຍວ່າດ້ວຍສະພາແຫ່ງຊາດ ສ່ວນ(ຮ່າງ)ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ 2024 ປະກອບມີທັງໝົດ 11 ໝວດ, ມີ 52 ມາດຕາ, ເຊິ່ງມີການປັບປຸງ 13 ມາດຕາຄື: ມາດຕາ 6, 9, 10, 12, 17, 23, 25, 26, 31, 40, 41 ແລະ ມາດຕາ 48 ການຄົ້ນຄວ້າ ແລະ ຮ່າງປັບປຸງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ໃນແຕ່ລະມາດຕາ ສ່ວນຫຼາຍແມ່ນຄ້າຍຄືກັນ, ການປັບປຸງ ໃນບາງມາດຕາແມ່ນເພີ່ມເນື້ອໃນເຂົ້າຕື່ມແລະບາງເນື້ອໃນຕັດອອກ; ບາງມາດຕາໄດ້ຫຍໍ້ເນື້ອໃນເຂົ້າ, ປັບປຸງເນື້ອໃນໃຫ້ສອດຄ່ອງກັບກົດໝາຍອື່ນ, ໄດ້ເພີ່ມມາດຕາໃໝ່ເຂົ້າຕື່ມ ແລະ ບາງມາດຕາໄດ້ຕັດເອົາອອກ ເພື່ອເຮັດໃຫ້ເນື້ອໃນຈະແຈ້ງ ແລະ ຄົບຖ້ວນກວ່າເກົ່າ. ພ້ອມນີ້ບັນດາຜູ້ແທນກອງປະຊຸມຍັງໄດ້ພ້ອມກັບປະກອບຄຳຄິດເຫັນໃສ່ບັນດາຮ່າງກົດຫມາຍ 3 ສະບັບ (ໃນຂົງເຂດສະພາແຫ່ງຊາດ) ເພື່ອເຮັດໃຫ້ມີເນື້ອໃນຄົບຖ້ວນ.

**(ບຸລາຕີ ແສນທະວົງ)**

# ສ້າງຄວາມຮັບຮູ້ເຂົ້າໃຈພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສພຂ



(ສພຊ) - ວັນທີ 27-29 ມີນາ 2024 ທີ່ສະໂມສອນເມືອງບຸນໃຕ້, ສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມເຝິກອົບຮົມໃຫ້ແກ່ ສສຊ, ສສຂ ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ; ເຂົ້າຮ່ວມມີບັນດາພະແນການ, ອົງການອ້ອມຂ້າງແຂວງ, ອ້ອມຂ້າງເມືອງແລະພາກສ່ວນທີ່ກ່ຽວຂ້ອງ; ໂດຍການເປັນປະທານ ຂອງທ່ານ ທອງສີ ເສົາສຸລີພົມ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງ ພ້ອມດ້ວຍວິທະຍາກອນຈາກ ສພຂ ຜົ້ງສາລີ, ສະພາແຫ່ງຊາດ (ສພຊ) ແລະ ນັກສຳມະນາກອນເຂົ້າຮ່ວມ.

ຈຸດປະສົງແມ່ນເພື່ອສ້າງຄວາມຮັບຮູ້ເຂົ້າໃຈ ກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ, ກົງຈັກພາຍໃນສະພາປະຊາຊົນແຂວງ ໃຫ້ແກ່ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ຊຸດທີ II, ອົງການຈັດຕັ້ງມະຫາຊົນ, ບັນດາພະແນການ, ອົງການອ້ອມຂ້າງແຂວງ, ພະນັກງານຊ່ວຍວຽກ ສສຂ ປະຈຳເມືອງ ແລະ ພະນັກງານ-ລັດຖະກອນ ສພຂ ແລະ ສ້າງຄວາມເຂັ້ມແຂງ ໃນການລົງເຄື່ອນໄຫວຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມຂອງສະພາປະຊາຊົນແຂວງ, ມະຕິກອງປະຊຸມຂອງຄະນະປະຈຳສະພາປະຊາຊົນແຂວງ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂອງອົງການບໍລິຫານລັດ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການກວດສອບແຫ່ງລັດ; ທັງເປັນການສ້າງເງື່ອນໄຂໃຫ້ສພຂ ແຂວງຜົ້ງສາລີ ໃນການປະຕິບັດພາລະບົດ, ສິດ ແລະ ໜ້າທີ່ຂອງຕົນ ໃນການເພີ່ມທະວີຄວາມສັກສິດ ແຫ່ງການຄຸ້ມຄອງເສດຖະກິດ-ສັງຄົມ, ການສືບຕໍ່ສ້າງ ແລະປັບປຸອຳນາດລັດຂອງແຂວງຜົ້ງສາລີໃຫ້ມີຄວາມເຂັ້ມແຂງ; ກອງປະຊຸມໄດ້ຮັບຟັງການສະເໜີຈຸດປະສົງ ແລະ ຜ່ານມະຕິຕົກລົງ ວ່າດ້ວຍການດຳເນີນກອງປະຊຸມເຝິກອົບຮົມ; ໄດ້ຮັບຟັງພາລະບົດບາດ ສິດ ແລະ ໜ້າທີ່ ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2; ຮັບຟັງພາລະບົດບາດ ສິດ ແລະ ໜ້າທີ ຂອງສະພາປະຊາຊົນແຂວງ, ພາລະບົດບາດ ສິດ ແລະໜ້າທີ່ຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເມືອງ; ຮັບຟັງສະເໜີພາລະບົດບາດ ສິດ ແລະ ໜ້າທີ່ ຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ຮັບຟັງຂຶ້ນນຳສະເໜີພາລະບົດບາດ ສິດ ແລະ ໜ້າທີ່ ຂອງຄະນະກຳມະການເສດຖະກິດ, ແຜນການ ແລະການເງິນ; ຮັບຟັງພາລະບົດບາດ ສິດ ແລະ ໜ້າທີ່ ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ຮັບຟັງການນຳສະເໜີພາລະບົດບາດ ສິດ ແລະ ໜ້າທີ່ ຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ແລະ ການຍົກສູງຄວາມຮູ້, ຄວາມສາມາດ ໃນການເປັນເສນາທິການທີ່ດີທາງດ້ານເນື້ອໃນ ແລະ ການບໍລິຫານ ໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ; ຮັບຟັງການພິຈາລະນາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ກ່ຽວກັບໂຄງການລົງທຶນຂອງລັດໃນແຕ່ລະປີ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ການຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນງົບປະມານ. ຈາກນັ້ນ, ຜູ້ແທນກອງປະຊຸມກໍໄດ້ແລກປ່ຽນແລກບົດຮຽນ, ປະກອບຄຳຄິດຄຳເຫັນຕໍ່ກັບບັນດາເນື້ອໃນທີ່ນຳສະເໜີ ດ້ວຍຄວາມຮັບຜິດຊອບສູງ, ກົງໄປກົງມາ ແລະ ດ້ວຍບັນຍາກາດສ້າງສັນ.

ຕອນທ້າຍຂອງກອງປະຊຸມ ທ່ານ ທອງສີ ເສົາສຸລີພົມ ໄດ້ສັງລວມຄືນຜົນກອງປະຊຸມຝຶກອົບໃນຄັ້ງນີ້. ເຊິ່ງສັງເກດເຫັນໄດ້ວ່າ ຫຼາຍພາກສ່ວນມີຄວາມຮັບຮູ້, ເຂົ້າໃຈ ແລະ ໃຫ້ຄວາມສົນໃຈຕໍ່ບັນດາເນື້ອໃນດັ່ງເປັນຢ່າງດີ, ສະແດງອອກຈາກການປະກອບຄວາມຄິດຄວາມເຫັນຂອງຜູ້ເຂົ້າຮ່ວມ ແລະ ພາກສ່ວນກ່ຽວຂ້ອງ.

ກອງປະຊຸມຝຶກອົບຮົມໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງ2, ສສຂ, ບັນດາພະແນການ, ອົງການອ້ອມຂ້າງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ (STEPs).

**(ສູນທອງ)**

# ສ້າງຄວາມເຂັ້ມແຂງການຂຶດຂຽນເອກະສານ, ທັກສະໃນການໂຄສະນາ-ປາຖະກະຖາ



(ສພຊ) - ກອງປະຊຸມຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນສະພາປະຊາຊົນ ແຂວງຫົວພັນ ໄດ້ຈັດຂຶ້ນ ໃນວັນທີ 27 ມີນາ 2024 ນີ້, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານ ຂອງທ່ານ ຄຳຟອງ ກົ້ວມີໄຊ ກຳມະການຄະນະປະຈຳ ເລຂາທິການສະພາປະຊາຊົນແຂວງ ມີຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນ ພາຍໃນ ສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອແນໃສ່ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະກ່ຽວກັບການຂຶດຂຽນເອກະສານ, ທັກສະໃນການໂຄສະນາ-ປາຖະກະຖາ ກໍຄືໂຄງຮ່າງ, ວິທີ ແລະ ຂັ້ນຕອນໃນການຂຽນເອກະສານສຳຄັນຕ່າງໆ ໃຫ້ແກ່ພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງຫົວພັນ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ.

ການຝຶກອົບຮົມໃນຄັ້ງນີ້ບັນດາທ່ານນັກສຳມະນາກອນໄດ້ຮັບຟັງການບັນຍາຍ ດ້ານທິດສະດີຈາກວິທະຍາກອນຂອງສະພາປະຊາຊົນແຂວງ ຈຳນວນ 04 ບົດຄື: ຝຶກຝົນຄວາມສາມາດໃນການຂຽນເອກະສານ; ຝຶກຝົນຄວາມສາມາດໃນການເວົ້າວຽກງານໂຄສະນາ-ປຸກລະດົມ ແລະ ວຽກງານເຄື່ອນທີ່; ວຽກງານເລຂານຸການ; ວຽກງານໂຄສະນາ-ປາຖະກະຖາ ແລະ ການໂຄສະນາຜ່ານສື່ ແລະ ບົດຮຽນການຂຽນບົດປະເພດຕ່າງໆ. ພ້ອມນັ້ນ; ບັນດາທ່ານທີ່ເຂົ້າຮ່ວມຝຶກອົບຮົມ ໄດ້ຍົກສູງຄວາມຮັບຜິດຊອບຂອງຕົນສຸມໃສ່ຄົ້ນຄວ້າ, ແລກປ່ຽນຄຳຄິດຄຳເຫັນ ເຊິ່ງກັນ ແລະ ກັນ ດ້ານທິດສະດີຕໍ່ກັບຫົວຂໍ້ຕ່າງໆທີ່ນຳມາຝຶກອົບຮົມ ໃຫ້ມີຄວາມຖືກຕ້ອງສາມາດປະຕິບັດພາລະບົດບາດການເປັນເສນາທິການໃຫ້ແກ່ຄະນະນຳຂອງຕົນແລະໝູນໃຊ້ເຂົ້າໃນວຽກງານ ໃຫ້ເກີດຜົນປະໂຫຍດສູງສຸດ.

**(ນັກຂ່າວ ສພຂ)**

# ຄະນະຮັບຜິດຊອບປັບປຸງກົດໝາຍ ເຄື່ອນໄຫວເຮັດວຽກຮ່ວມກັບ ສພຂ ໄຊສົມບູນ



(ສພຊ) - ໃນລະຫວ່າງ ວັນທີ 27-28 ມີນາ 2024 ຜ່ານມາ, ທ່ານ ດຣ. ຄຳຈັນ ໂສຕາປະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການບັນດາເຜົ່າ, ຄະນະຮັບຜິດຊອບປັບປຸງກົດໝາຍ ໃນຂົງເຂດສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຮັດວຽກຮ່ວມກັບ ສະພາປະຊາຊົນແຂວງໄຊສົມບູນ ໂດຍຖືກຕ້ອນຮັບຈາກ ທ່ານ ພັອ. ວີໄຊທໍ່ ເພຍຫຼວງຈິ່ງເສີ ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 18, ຮອງປະທານສະພາປະຊາຊົນແຂວງ ແລະ ໃຫ້ກຽດເຂົ້າຮ່ວມຂອງ ທ່ານ ຕົ່ງມົວ ຊົ່ວໂກ້ ຮອງເລຂາພັກແຂວງ, ຮອງເຈົ້າແຂວງໄຊສົມບູນ ມີບັນດາທ່ານ ສສຂ ແລະ ມີຄະນະພັກ-ຄະນະນຳຂອງແຂວງໄຊສົມບູນກໍໃຫ້ກຽດເຂົ້າຮ່ວມໃນຄັ້ງນີ້ດ້ວຍ.

ໃນໂອກາດນີ້, ທ່ານ ດຣ. ຄຳຈັນ ໂສຕາປະເສີດ ປະທານກອງປະຊຸມ ໄດ້ກ່າວເປີດກອງປະຊຸມວ່າ: ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະໜ້າທີ່ຂອງ ຄະນະຮັບຜິດຊອບປັບປຸງກົດໝາຍທີ່ສະພາແຫ່ງຊາດໄດ້ກຳນົດນຳໃຊ້ ໃນໄລຍະຜ່ານມາທີ່ເຫັນວ່າ: ບໍ່ສອດຄ່ອງກັບການປະຕິບັດຕົວຈິງນັ້ນ ຈຶ່ງຕ້ອງປັບປຸງຄືນໃນຫຼາຍມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ. ໂດຍຄະນະປະຈຳສະພາແຫ່ງຊາດ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບວຽກນີ້ ໂດຍສະເພາະເພື່ອລົງເຄື່ອນໄຫວທາບທາມຮ່າງກົດໝາຍ 03 ສະບັບ ໃນແຕ່ລະທ້ອງຖິ່ນ. ແລ້ວທ່ານ ໄດ້ນຳສະເໜີບົດລາຍງານກ່ຽວກັບການປັບປຸງກົດໝາຍ ວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ), ພ້ອມທັງເຈາະຈີ້ມ ແລະໃຫ້ທິດຊີ້ນຳໃນການປະກອບຄຳເຫັນຕໍ່ຮ່າງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ໃນໂອກາດດຽວກັນນັ້ນ, ບັນດາທ່ານຜູ້ແທນກອງປະຊຸມ ໄດ້ຜັດປ່ຽນກັນ ປະກອບຄຳເຫັນຕໍ່ຮ່າງກົດໝາຍ03ສະບັບ, ຢ່າງຄຶກຄື້ນ ແບບກົງໄປກົງມາ ແລະ ທ່ານ ປະທານກອງປະຊຸມ ໄດ້ສະຫຼຸບ-ສັງລວມ ການປະກອບຄຳຕໍ່ບົດລາຍງານ ກ່ຽວກັບການປັບປຸງກົດໝາຍ ທີ່ມີຫຼາຍຈຸດ, ຫຼາຍມາດຕາທີ່ຕ້ອງໄດ້ປັບປຸງຄືນ ຕາມການສະເໜີຂອງຜູ້ແທນ ແລະ ພາກສ່ວນຮັບຜິດຊອບປັບປຸງກົດໝາຍ ຈະນຳເອົາຂໍ້ມູນອັນລະອຽດນັ້ນ ເພື່ອນຳໄປລາຍງານໃຫ້ແກ່ສະພາແຫ່ງຊາດ ຮັບຊາບ ແລະ ປັບປຸງກົດໝາຍ 03 ສະບັບ ຕາມການສະເໜີມານີ້ຢ່າງເໝາະສົມ.

**(ນາງ ອຳໄພພອນ ແກ້ວວິໄລ)**

# ສພຂ ສາລະວັນ ເຄື່ອນໄຫວຢ້ຽມຢາມ ແລະ ພົບປະແລກປ່ຽນບົດຮຽນກັບ ສພຂ ຫຼວງນ້ຳທາ



(ສພຊ) -ເພື່ອເປັນການພົບປະແລກປ່ຽນບົດຮຽນໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ (ສພຂ) ໃນການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍ; ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງໃນການປະຕິບັດ 3 ພາລະບົດບາດຂອງສະພາປະຊາຊົນ ແລະ ຮັດແໜ້ນຄວາມສາມັກຄີ, ລະຫວ່າງສະພາປະຊາຊົນແຂວງ ຫຼວງນ້ຳທາ ກັບສະພາປະຊາຊົນແຂວງສາລະວັນ.

ສະພາປະຊາຊົນແຂວງຫຼວງນ້ຳທາກັບສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໃນວັນທີ 1 ເມສາ 2024 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫຼວງນ້ຳທາ ໂດຍການເປັນປະທານຮ່ວມຂອງທ່ານ ຄຳຟອງ ອິນມານີ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ປະທານສະພາປະຊາຊົນແຂວງຫຼວງນ້ຳທາ ແລະ ທ່ານ ສີເຮັງ ຫອມສົມບັດ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14, ປະທານສະພາປະຊາຊົນແຂວງສາລະວັນ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງຫລວງນ້ຳທາ ແລະ ແຂວງສາລະວັນ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ, ປະທານ, ຮອງປະທານຄະນະກຳມະການ, ຫົວໜ້າ, ຮອງຫົວຫນ້າຂະແໜງ ພ້ອມດ້ວຍວິຊາການທັງສອງແຂວງເຂົ້າຮ່ວມທັງໝົດ 40 ກວ່າທ່ານ.

ກອງປະຊຸມໄດ້ຮັບຟັງບົດລາຍງານຫຍໍ້ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງຫຼວງນ້ຳທາ ແລະ ສະພາປະຊາຊົນແຂວງສາລະວັນ; ພ້ອມນັ້ນທັງສອງແຂວງຍັງໄດ້ແລກປ່ຽນບົດຮຽນໃນຫົວຂໍ້ຕ່າງໆ ເປັນຕົ້ນແມ່ນ ການຈັດຕັ້ງປະຕິບັດ 3 ພາລະບົດບາດ ຂອງສະພາປະຊາຊົນແຂວງ ຄື: ດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ແລະ ດ້ານການຕິດຕາມກວດກາ, ປະສານງານກັບອົງການປົກຄອງແຂວງແລະພາກສ່ວນກ່ຽວຂ້ອງ, ການດຳເນີນກອງປະຊຸມສະພາປະຊາຊົນແຂວງ; ການຄຸ້ມຄອງວຽກງານຈັດຕັ້ງ-ພະນັກງານ ເຊັ່ນ: ການກຳນົດຕຳແໜ່ງງານ, ການປັບປຸງການຈັດຕັ້ງ ແລະ ສ້າງຕັ້ງກົງຈັກຊ່ວຍວຽກຄະນະປະຈຳສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງບັນດາເມືອງ ແລະ ການຈັດຕັ້ງປະຕິບັດໜ້າທີ່ຂອງບັນດາຄະນະກຳມະການ, ຄະນະເລຂາທິການ ແລະບັນດາຂະແໜງຊ່ວຍວຽກ ພ້ອມດຽວກັນ ຍັງໄດ້ເຊັນບົດບັນທຶກຮ່ວມລະຫວ່າງສະພາປະຊາຊົນແຂວງຫລວງນ້ຳທາກັບສະພາປະຊາຊົນແຂວງສາລະວັນ ໃນການແລກປ່ຽນບົດຮຽນຄັ້ງນີ້.

ໃນໂອກາດພົບປະແລກປ່ຽນບົດຮຽນຮ່ວມກັບສະພາປະຊາຊົນແຂວງຫວງນ້ຳທາຄັ້ງນີ້ ຄະນະຜູ້ແທນສະພາປະຊາແຂວງສາລະວັນ, ໄດ້ໄປທັດສະນະຢ້ຽມຢາມແລະຫງ່ວຊົມການຜະລິດກະສິກຳ, ສະຖານທີ່ທ່ອງທ່ຽວຂອງແຂວງ ເຊັ່ນ: ວັດສາມັກຄີໄຊ, ພະທາດຫຼວງນ້ຳທາ, ນ້ຳຕົກຕາດນ້ຳດີ.

**(ນັກຂ່າວ ສພຂ)**




# ຮອງປະທານ ສພຂ ເຄື່ອນໄຫວຕິດຕາມກວດກາ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ



(ສພຊ) - ໃນລະຫວ່າງ ວັນທີ 27-28 ມີນາ 2024 ທີ່ຜ່ານມາ, ທ່ານ ສິງຕັນ ໄຊລືຊື່ງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະຈາກສະພາປະຊາຊົນແຂວງ ໄດ້ລົງຕິດຕາມກວດກາການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຢູ່ເມືອງໂພນທອງ.

ການລົງຕິດຕາມກວດກາໃນຄັ້ງນີ້ເພື່ອເກັບກຳຂໍ້ມູນ, ຮັບຟັງຄຳຄິດ-ຄຳເຫັນຂອງປະຊາຊົນ ແລະ ການນຳຂອງທ້ອງຖິ່ນທີ່ກ່ຽວຂ້ອງກັບ 2 ວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາເສດຖະກິດ ແລະ ບັນຫາຢາເສບຕິດ ທັງເປັນການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍຂົງເຂດຕ່າງໆຢູ່ທ້ອງຖິ່ນ.

ໃນພິທີໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຢູ່ເມືອງໂພນທອງ; ຈາກນັ້ນ ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນ ປະກອບຄຳຄິດຄຳເຫັນ ຕໍ່ບັນດາເນື້ອໃນເອກະສານຕ່າງໆ ຢ່າງຟົດຟື້ນ ແລະ ກົງໄປກົງມາບົນພື້ນຖານຄວາມເປັນເອກະພາບ; ໄປຄຽງຄູ່ກັບການສະເໜີບັນຫາຈາກບັນດາພາກສ່ວນກ່ຽວຂ້ອງຂອງເມືອງ ແລະ ແຂວງ, ເຊິ່ງບາງຄຳສະເໜີກໍໄດ້ມີການອະທິບາຍ ແລະ ຊີ້ແຈງກັບທີ່, ສ່ວນບາງຄຳສະເໜີທີ່ພົວພັນເຖິງພາກສ່ວນອື່ນ ກໍຈະໄດ້ຈັດສົ່ງໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ ຫຼື ມີຄຳຕອບໃຫ້ປະຊາຊົນຕາມພາລະບົດບາດ.

ໃນຕອນທ້າຍ ທ່ານ ສິງຕັນ ໄຊລືຊື່ງ ໄດ້ມີຄຳເຫັນຊີ້ນຳ ແລະ ເນັ້ນໜັກຕໍ່ຄະນະພັກ-ຄະນະນຳຂອງເມືອງໃຫ້ເອົາໃຈໃສ່ສືບຕໍ່ແກ້ໄຂແລະຊອກວິທີທາງອອກ ເພື່ອຊ່ວຍເຫຼືອບັນດາຄອບຄົວທີ່ທຸກຍາກໃຫ້ພົ້ນທຸກ, ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ພໍ່-ແມ່ປະຊາຊົນຮັບຮູ້, ເຂົ້າໃຈ, ກໍາໄດ້ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ສືບຕໍ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

**(ນາງ ວິໄວອນ ປັນຍາສິດ)**

# ບັນຫາພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງຈຳປາສັກ

ທ່ານ ສາຍທອງ ໄຊຍະວົງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ, ປະທານສະພາປະຊາຊົນແຂວງຈຳປາສັກ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນສະພາແຫ່ງຊາດ ໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ: ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງຈຳປາສັກ ມີຫຼາຍບັນຫາ ເຊິ່ງຂ້າພະເຈົ້າຈະຍົກໃຫ້ເຫັນ 1 ບັນຫາຄື: ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດກໍຄືບັນຫາການອ່ອນຄ່າຂອງເງິນກີບ, ອັດຕາເງິນເຟີ້, ລາຄາສິນຄ້າເພີ່ມສູງຂຶ້ນ ເຊິ່ງມັນໄດ້ສ້າງຜົນກະທົບຕໍ່ພະນັກງານ, ທະຫານ, ຕຳຫຼວດ ພໍ່ແມ່ປະຊາຊົນ ໃນການດຳລົງຊີວິດ, ແຜນພັດທະນາເສດຖະກິດ-ສັງຄົມ, ຄວາມເຊື່ອໝັ້ນສັງຄົມກໍຄືສາກົນ ເຊິ່ງມີປັດໄຈຈາກພາຍນອກສ່ວນໜຶ່ງ ແລະ ປັດໄຈພາຍໃນທີ່ມີຜົນກະທົບຕໍ່ອັດຕາແລກປ່ຽນກໍຄືການອ່ອນຄ່າຂອງເງິນກີບ ສິ່ງຜົນໃຫ້ມີເງິນເຟີ້, ລາຄາສິນຄ້າສູງຂຶ້ນ. ເນື່ອງຈາກປະເທດເຮົາເປັນປະເທດທີ່ນຳເຂົ້າສິນຄ້າຈາກຕ່າງປະເທດ ເມື່ອເງິນກີບອ່ອນຄ່າ ລາຄາສິນຄ້າກໍແມ່ນເພີ່ມຂຶ້ນ ເງິນເຟີ້ກໍຕາມມາ ເຊິ່ງເປັນສາຍເຫດທີ່ສົ່ງຜົນກະທົບໃຫ້ສະພາບເສດຖະກິດ-ສັງຄົມ ຂອງປະເທດເຮົາ.

**● ວິທີແກ້ໄຂ:**

-ວາງມາດຕະການ: ລັດຖະບານຕ້ອງກຳນົດມາດຕະການຢ່າງເດັດຂາດ ແລະ ເຂັ້ມງວດໃນການປະຕິບັດໂທດຕໍ່ກຸ່ມຄົນທີ່ສ້າງຄວາມຜັນຜວນເກັງກຳໄລນຳອັດຕາແລກປ່ຽນ;

- ປະຕິບັດກົດໝາຍຢ່າງເຂັ້ມງວດ: ຄວນປະຕິບັດ ແລະ ລົງໂທດຕໍ່ຜູ້ທີ່ນຳໃຊ້ເງິນຕາຕ່າງປະເທດໃນການຊື້-ຂາຍສິນຄ້າ ແລະ ການບໍລິການຕ່າງໆໃນ ສປປ ລາວ ຢ່າງເຂັ້ມງວດ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ເງິນກີບ, ຢູ່ເມືອງລາວຕ້ອງໃຊ້ເງິນກີບ;

- ນຳໃຊ້ລະບົບທະນາຄານ; ການສົ່ງອອກ-ນຳເຂົ້າສິນຄ້າ ຕ້ອງຊຳລະສະສາງຜ່ານລະບົບທະນາຄານ;

-ສົ່ງເສີມການຜະລິດສິນຄ້າເພື່ອຊົມໃຊ້ພາຍໃນແລະສົ່ງອອກ: ສ້າງສິ່ງອຳນວຍຄວາມສະດວກ ແລະ ນະໂຍບາຍຕ່າງໆໃຫ້ແກ່ການຜະລິດສິນຄ້າເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ໃຫ້ຫຼາຍຂຶ້ນ;

- ຄວບຄຸມການນຳເຂົ້າສິນຄ້າທີ່ສົ່ງຜົນກະທົບຕໍ່ສິນຄ້າພາຍໃນທີ່ສາມາດຜະລິດໄດ້ ແລະ ຈຳກັດການນຳເຂົ້າສິນຄ້າຟຸມເຟືອຍແລະສົ່ງເສີມການຊົມໃຊ້ສິນຄ້າ ແລະ ຜະລິດຕະພັນລາວ;

- ສົ່ງເສີມວຽກງານການທ່ອງທ່ຽວ: ສ້າງສິ່ງອຳນວຍຄວາມສະດວກດ້ານຕ່າງໆເຊັ່ນ: ປັບປຸງເສັ້ນທາງທີ່ເຊື່ອມໂຍງກັບແຫຼ່ງທ່ອງທ່ຽວຕ່າງໃຫ້ສາມາດໄປມາສະດວກ ແລະ ເຂົ້າເຖິງໄດ້ງ່າຍ, ມີການໂຄສະນາຜ່ານສື່ມວນຊົນດ້ວຍຫຼາຍຮູບແບບວິທີການ ອອກສູ່ສັງຄົມໃຫ້ຮັບຮູ້ຢ່າງກວ້າງຂວາງ ບໍ່ວ່າຈະເປັນຈຸດທີ່ຕັ້ງສະຖານທີ່ແຫຼ່ງທ່ອງທ່ຽວ, ວິທີການເດີນທາງໄປຫາແຫຼ່ງທ່ອງທ່ຽວ, ສະຖານທີ່ພັກເຊົາ, ຮ້ານອາຫານ, ສິນຄ້າ-ສິ່ງຂອງທີ່ເປັນເອກະລັກເພື່ອເປັນຂອງຕ້ອນທີ່ລະລຶກແລະມາລະຍາດໃນການເປັນເຈົ້າບ້ານທີ່ດີຂອງປະຊາຊົນລາວ ເພື່ອເຮັດໃຫ້ນັກທ່ອງທ່ຽວປະທັບໃຈ ແລະຢາກກັບມາທ່ອງທ່ຽວອີກໃນຕໍ່ໜ້າ;

-ດຶງດູດການລົງທຶນພາຍໃນແລະຈາກຕ່າງປະເທດ: ເມື່ອມີການລົງທຶນພາຍໃນແລະນັກລົງທຶນຈາກຕ່າງປະເທດ ມາລົງດຳເນີນທຸລະກິດຢູ່ ສປປ ລາວ ຫຼາຍຂຶ້ນ ໂດຍສະເພາະການລົງທຶນທີ່ສອດຄ່ອງກັບນະໂຍບາຍທີ່ລັດຖະບານວາງອອກ ໂດຍນຳໃຊ້ແຮງງານພາຍໃນ ກໍຄືປະຊາຊົນລາວ ກໍຈະເປັນການຊ່ວຍສ້າງວຽກເຮັດງານທຳແລະເຮັດໃຫ້ປະຊາຊົນມີລາຍຮັບມາດຸ່ນດ່ຽງລາຍຈ່າຍ.

**1. ໄລຍະຜ່ານມາ ສະພາປະຊາຊົນແຂວງຈຳປາສັກ ໄດ້ປະຕິບັດໃນການຕິດຕາມ 02 ວາລະແຫ່ງຊາດ ມີຜົນໄດ້ຮັບ ຫຼື ຂໍ້ຫຍຸ້ງຍາກແນວໃດ?**

**ຕອບ:** ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຈຳປາສັກ ທີ່ຜ່ານມາ ໄດ້ຮັບຟັງການລາຍງານຈາກອົງການປົກຄອງແຂວງຈຳປາສັກແລະກອງບັນຊາການປ້ອງກັນຄວາມສະຫງົບແຂວງ ກ່ຽວກັບການຈັດຕັ້ງປະຕິບັດ 02 ວາລະແຫ່ງຊາດ ໃນໄລຍະຜ່ານມາເຫັນໄດ້ວ່າແຕ່ລະພາກສ່ວນໄດ້ມີຄວາມພະຍາຍາມໃນການຈັດຕັ້ງປະຕິບັດວຽກງານຕາມຄວາມຮັບຜິດຊອບ ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ແລະຍັງມີຫຼາຍໜ້າວຽກທີ່ຈະຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດ ຄຽງຄູ່ກັບການຊຸກຍູ້ສັງຄົມໃຫ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ 02 ວາລະແຫ່ງຊາດໃຫ້ມີຜົນສຳເລັດ.



**-ທ່ານມີທິດທາງຈຸດສຸມແກ້ໄຂບັນຫາດັ່ງກ່າວໃນຕໍ່ໜ້າຄືແນວໃດ?**

**ຕອບ:** ຕໍ່ກັບບັນຫາແລະສິ່ງທ້າທາຍ ທີ່ກ່າວມາຂ້າງເທິງນັ້ນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແລະ ສະມາຊິກສະພາປະຊາຊົນແຂວງຈຳປາສັກ ຈະໄດ້ສືບຕໍ່ສົມທົບກັບສະພາແຫ່ງຊາດ ຊຸກຍູ້ ແລະ ຕິດຕາມອົງການປົກຄອງແຂວງຈຳປາສັກ, ເມືອງ, ນະຄອນແລະບັນດາອົງການຈັດຕັ້ງທຸກຂັ້ນເອົາໃຈໃສ່ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ ໂດຍສະເພາະການແກ້ໄຂບັນຫາເສດຖະກິດ-ການເງິນ ໃຫ້ກັບມາສູ່ສະພາວະປົກກະຕິ, ພ້ອມທັງກະຕຸກຊຸກຍູ້ອົງການປົກຄອງ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການຄົ້ນຄວ້າສ້າງຖານແຫຼ່ງລາຍຮັບໃໝ່ຂອງແຂວງຈຳປາສັກ ເພື່ອຮັບປະກັນດ້ານງົບປະມານ ແລະ ສືບຕໍ່ຈັດຕັ້ງປະຕິບັດຜັນຂະຫຍາຍ 2 ເນື້ອໃນວາລະແຫ່ງຊາດ ໂດຍໄດ້ກຳນົດຄາດໝາຍໃນວາລະຂອງແຂວງເຂົ້າສູ່ວຽກງານຕົວຈິງຂອງຕົນຄື:

**● ວາລະແຫ່ງຊາດກ່ຽວກັບ ການແກ້ໄຂບັນຫາເສດຖະກິດ-ການເງິນ ສືບຕໍ່ຈັດຕັ້ງປະຕິບັດ 5 ວຽກຈຸດສຸມ:**

1) ການສົ່ງເສີມການຜະລິດ-ການບໍລິການເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ;

2) ການສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ;

3) ການສົ່ງເສີມການປະຢັດ, ຕ້ານການຟູມເຟືອຍ, ຍົກສູງປະສິດທິຜົນການລົງທຶນ-ລາຍຈ່າຍງົບປະມານ ແລະ ການແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ;

4) ການສ້າງສະເຖຍລະພາບດ້ານເງິນຕາ;

5) ການຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ.

**● ວາລະແຫ່ງຊາດກ່ຽວກັບການແກ້ໄຂບັນຫາຢາເສບຕິດ ສືບຕໍ່ຈັດຕັ້ງປະຕິບັດ:**

1)ເພີ່ມທະວີຄວາມຮັບຜິດຊອບການເມືອງຂອງຄະນະນຳກອງບັນຊາການປ້ອງກັນຄວາມສະຫງົບແຂວງ ໃນການນຳພາ-ຊີ້ນຳວຽກງານການເມືອງແນວຄິດ, ຈັນຍາບັນ, ຈັນຍາທຳ ໃຫ້ ແກ່ນາຍ ແລະ ພົນຕຳຫຼວດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

2) ເອົາໃຈໃສ່ ຕິດຕາມກວດກາ ການປະເມີນຜົນການປະຕິບັດໜ້າທີ່ ຂອງ ນາຍ ແລະ ພົນຕຳຫຼວດໃຫ້ເປັນປົກກະຕິຕໍ່ເນື່ອງ ໃນແຕ່ລະໄລຍະ;

3) ເພີ່ມທະວີການປະສານສົມທົບກັບພາກສ່ວນກ່ຽວຂ້ອງຕາມສາຍຕັ້ງ-ສາຍຂວາງ ເພື່ອຮັບປະກັນໃຫ້ສາມາດຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນວາລະຂອງແຂວງ ຕາມເນື້ອໃນວາລະແຫ່ງຊາດກ່ຽວກັບການແກ້ໄຂບັນຫາຢາເສບຕິດ ຢ່າງເຂັ້ມງວດ.

ໃນນາມເປັນຕົວແທນຕາງໜ້າສະມາຊິກສະພາສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ກໍຄືສະມາຊິກສະພາປະຊາຊົນແຂວງຈຳປາສັກ ສະແດງຄວາມຢ້ຽມຢາມຖາມຂ່າວມາຍັງພໍ່ແມ່ປະຊາຊົນບັນດາເຜົ່າ ໂດຍສະເພາະພໍ່ແມ່ປະຊາຊົນຊາວແຂວງຈຳປາສັກ ໃນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດທີ່ປະເທດເຮົາພວມປະເຊີນຢູ່ ເວົ້າລວມ, ເວົ້າສະເພາະແມ່ນຊາວແຂວງຈຳປາສັກ ຂໍໃຫ້ພໍ່ແມ່ປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດມີຄວາມສາມັກຄີ, ອົດທົນຜ່ານຜ່າວິກິດການນີ້ໄປພ້ອມກັນແລະເຂົ້າຮ່ວມປະຕິບັດຕາມແນວທາງນະໂຍບາຍ ທີ່ພັກ-ລັດ ວາງອອກ ແລະ ສະເໜີໃຫ້ບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ມີສ່ວນຮ່ວມໃນການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂເສດຖະກິດ-ການເງິນແລະແກ້ໄຂບັນຫາຢາເສບຕິດຢ່າງເຂັ້ມແຂງ.

# ມອບເຄື່ອງຊ່ວຍເຫຼືອໃຫ້ຜູ້ປະສົບອັກຄີໄພ



(ສພຊ) - ໃນວັນທີ 27 ມີນາ 2024, ທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈຳພັກແຂວງ ຮອງປະທານສະພາປະຊາຊົນແຂວງສາລະວັນ, ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ສົມທົບກັບສະມາຊິກສະພາປະຊາຊົນແຂວງປະຈຳເມືອງເລົ່າງາມແລະອົງການປົກຄອງເມືອງລົງເຄື່ອນໄຫວຢ້ຽມຢາມຕິດຕາມ ຄອບຄົວຂອງ ທ້າວ ຄຳລຽນ ອາຍຸ 70 ປີ ອາຊີບຊາວສວນ ທີ່ປະສົບເຄາະຮ້າຍ ເກີດອັກຄີໄພໄຟໄໝ້ເຮືອນໝົດຫຼັງ ຢູ່ທີ່ບ້ານພໍ່ເຂັມ ເມືອງເລົ່າງາມ ແຂວງສາລະວັນ, ອີງຕາມການລາຍງານຂອງທ່ານນາຍບ້ານພໍ່ເຂັມ ໃຫ້ຮູ້ວ່າ: ເຫດການໄຟໄໝ້ ເກີດຂຶ້ນຕອນເວລາ 14:20 ໂມງ, ຂອງວັນທີ 25 ມີນາ 2024 ຈຸດເກີດໄຟໄໝ້ຢູ່ຄົວເຮືອນແຕ່ງກິນ ແລະໄຟໄດ້ລຸກລາມເຮັດໃຫ້ໄຟໄໝ້ຢ່າງຮຸນແຮງ ບໍ່ສາມາດຄວບຄຸມດັບໄຟໄດ້ທັນ, ເຮັດໃຫ້ໄຟໄໝ້ເຮືອນໄໝ້ໝົດຫຼັງ ມີເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງປູກຝັງ, ພາຫະນະ ແລະ ເງິນສົດ ເສຍຫາຍລວມມູນຄ່າ 237 ລ້ານກວ່າກີບ, ແຕ່ໂຊກດີບໍ່ມີຜູ້ບາດເຈັບ ແລະ ບໍ່ມີຜູ້ເສຍຊີວິດ.

ໂອກາດດັ່ງກ່າວ ທ່ານຮອງປະທານສະພາປະຊາຊົນແຂວງ ໄດ້ສະແດງຄວາມເປັນຫ່ວງເປັນໄຍ, ເສຍໃຈຕໍ່ເຫດການທີ່ເກີດຂຶ້ນພ້ອມໃຫ້ກຳລັງໃຈ ຟື້ນຟູຈິດໃຈໃຫ້ເຂົ້າສູ່ປົກກະຕິ,ພ້ອມດຽວກັນກໍໄດ້ມອບເງິນສົດ ຈຳນວນ 5 ແສນກີບ ແລະ ເຄື່ອງໃຊ້ໃນຄົວເຮືອນລວມມູນຄ່າ 2 ລ້ານກີບ ມອບໃຫ້ແກ່ຄອບຄົວ ທ້າວ ຄຳລຽນ ເພື່ອເປັນ ການຊ່ວຍເຫຼືອແບ່ງເບົາບັນເທົາທຸກໃນເບື້ອງຕົ້ນ.

**(ດີລຳພົນ ພົມມະຈັນ)**





# ສພຂ ຄໍາມ່ວນ ປາຖະກະຖາ 2 ວັນສໍາຄັນຂອງຊາດ



(ສພຊ) - ວັນທີ 2 ເມສາ 2024, ຢູ່ທີ່ສໍານັກງານສະພາປະຊາຊົນແຂວງຄໍາມ່ວນ ໄດ້ຈັດພິທີປາຖະກະຖາ 2 ວັນສໍາຄັນທາງປະຫວັດສາດວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 69 ປີ ( 22 ມີນາ 1955-22 ມີນາ 2024 ) ແລະ ລະນຶກມູນເຊື້ອ 21 ມີນາ ວັນນັກຮົບເສຍອົງຄະແລະເສຍສະຫຼະຊີວິດເພື່ອປະເທດຊາດ ຄົບຮອບ 78 ປີ ( 21 ມີນາ 1946-21 ມີນາ 2024 ) ໂດຍການໃຫ້ກຽດປາຖະກະຖາຂອງ ທ່ານ ບົວພັນ ແສງຈັນ ກໍາມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງຄໍາມ່ວນ, ເຂົ້າຮ່ວມ ມີບັນດາທ່ານຄະນະກໍາມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ທ່ານ ບົວພັນ ແສງຈັນ ໄດ້ຍົກໃຫ້ເຫັນມູນເຊື້ອການກໍາເນີດຂອງພັກປະຊາຊົນປະຕິວັດລາວ ແລະ ຄວາມໝາຍສໍາຄັນ, ພາລະກິດອັນພົ້ນເດັ່ນຂອງພັກປະຊາຊົນປະຕິວັດລາວ ຕະຫຼອດໄລຍະ 69 ປີ ແຫ່ງການນໍາພາການຕໍ່ສູ້ປົດປ່ອຍຊາດ, ໄລຍະປົກປັກຮັກສາ ແລະ ສ້າງສາປະເທດຊາດແຕ່ປີ 1975-1985 ແລະໄລຍະຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ປີ 1986 ຮອດປັດຈຸບັນ ເຊິ່ງເຫັນໄດ້ວ່າປະເທດຊາດໄດ້ຮັບການພັດທະນາມີຜົນສໍາເລັດຢ່າງໃຫຍ່ຫຼວງ ສປປ ລາວ ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງ ແລະ ຍົກສູງລື່ນແຕ່ກ່ອນຢ່າງຈະແຈ້ງ, ອັນພົ້ນເດັ່ນແມ່ນຍອດຜະລິດຕະພັນພາຍໃນໄດ້ເພີ່ມຂຶ້ນເປັນແຕ່ລະໄລຍະ. ທັງນີ້ແມ່ນເພື່ອເປັນການທົບທວນຄືນມູນເຊື້ອ ແລະ ໄຊຊະນະອັນຍິ່ງໃຫຍ່ຂອງພາລະກິດແຫ່ງການຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ແລະ ຜົນສໍາເລັດໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ພາຍໃຕ້ການນໍາພາຂອງພັກເຮົາ ແນໃສ່ເພີ່ມທະວີການສຶກສາອົບຮົມໃຫ້ສະມາຊິກພັກ-ພະນັກງານ, ທະຫານ, ຕໍາຫຼວດ ຕະຫຼອດຮອດປະຊາຊົນບັນດາເຜົ່າທຸກທົ່ວໜ້າ ໃຫ້ຮັບຮູ້ ແລະ ເຂົ້າໃຈ ຢ່າງເລິກເຊິ່ງເຖິງນໍ້າໃຈຮັກຊາດ, ມູນເຊື້ອສາມັກຄີປອງດອງປະຊາຊົນບັນດາເຜົ່າ, ນໍ້າໃຈຕໍ່ສູ້ອັນອົງອາດກ້າຫານຂອງກອງທັບ ແລະ ປະຊາຊົນລາວ, ເພື່ອພ້ອມກັນນໍາເອົາມູນເຊື້ອ ແລະຜົນງານອັນຍິ່ງໃຫຍ່ດັ່ງກ່າວເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງຂອງຂະແໜງການ ແລະທ້ອງຖິ່ນໃຫ້ບັນລຸຕາມຄາດໝາຍທີ່ພັກໄດ້ກໍານົດໄວ້, ທັງເພື່ອລະນຶກເຖິງວິລະກໍາອັນຍິ່ງໃຫຍ່ຄວາມເສຍສະຫຼະອັນອົງອາດກ້າແກ່ນຂອງປະຊາຊົນຊາວເມືອງທ່າແຂກ ພາຍໃຕ້ການນໍາພາຂອງປະທານ ສຸພານຸວົງ ພ້ອມດ້ວຍໝູ່ຄະນະວິລະບູລຸດເຫຼັກ ໃນວັນທີ 21 ມີນາ 1946.

ພ້ອມກັນນັ້ນ, ໄດ້ຍົກໃຫ້ເຫັນເຖິງມູນເຊື້ອ 21 ມີນາ 1946 ວັນນັກຮົບເສຍອົງຄະ ແລະ ເສຍສະຫລະຊີວິດເພື່ອປະເທດຊາດໂດຍສະເພາະແມ່ນສະພາບການກະກຽມຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຂອງໜ່ວຍພັກເມືອງທ່າແຂກ, ເຫດການໆ ຕໍ່ສູ້ຢ່າງພິລະອາດຫານຂອງທະຫານ ແລະປະຊາຊົນຢູ່ເມືອງທ່າແຂກ ແລະ ຄວາມໝາຍຄວາມສໍາຄັນຂອງບັ້ນຮົບປ້ອງກັນຕົວເມືອງທ່າແຂກ ເຊິ່ງບັ້ນຮົບດັ່ງກ່າວແມ່ນໜຶ່ງໃນບັ້ນຮົບທີ່ຕໍ່ສູ້ສໍາຄັນໃນລາວ, ມັນບໍ່ແມ່ນພຽງແຕ່ເປັນວັນຄຽດແຄ້ນຂອງປະຊາຊົນລາວຕໍ່ພວກລ່າເມືອງຂຶ້ນຝຣັ່ງຜູ້ຮຸກຮານເທົ່ານັ້ນ, ມັນຍັງເປັນວັນສາມັກຄີຕໍ່ສູ້ດ້ວຍເລືອດເນື້ອເປັນ ຕາຍນໍາກັນ ລະຫວ່າງ 2 ຊາດ ລາວ-ຫວຽດນາມ ອ້າຍນ້ອງທີ່ເປັນແວ່ນແຍ່ງອັນເຫຼື້ອມໃສ ຂອງນໍ້າໃຈສູ້ຮົບພິລະອາດຫານ ບໍ່ຍອມຈໍານົນຂອງກອງທັບ ແລະ ປະຊາຊົນເມືອງທ່າແຂກແຂວງຄໍາມ່ວນ ກໍຄືການບັນຊາເດັດດ່ຽວໜຽວແໜ້ນຂອງຄະນະກອງບັນຊາການກໍາລັງປະກອບອາວຸດພວກເຮົາໂດຍແມ່ນປະທານ ສຸພານຸວົງ ເປັນຜູ້ນໍາໜ້າ ມັນໄດ້ຝັງເລິກໃນດວງ ໃຈຂອງປະຊາຊົນລາວແລະຫວຽດນາມ ຕ່າງດ້າວທີ່ຮັກຊາດຈີນຊື່ວກາລະນານ, ບັ້ນຮົບປ້ອງກັນຕົວເມືອງທ່າແຂກໄດ້ພິສູດໃຫ້ເຫັນວ່າ ປະທານ ສຸພານຸວົງ ບໍ່ພຽງແຕ່ເປັນ ເຊື້ອເຈົ້າເປັນນັກຮຽນຮູ້ ແລະນັກວິສະວະກອນທີ່ໂດດເດັ່ນເທົ່ານັ້ນແຕ່ຍັງເປັນນັກຮົບທີ່ກ້າແກ່ນ ເສຍສະຫຼະເພື່ອປະເທດຊາດຢ່າງອົງອາດກ້າຫານ ທັງຮູ້ປັບປຸງກໍ່ສ້າງກໍາລັງ ແລະ ຮູ້ຈັກສຶກສາອົບ ຮົມຊາວໜຸ່ມໃຫ້ມີຈິດໃຈຮັກຊາດຂຶ້ນສູ່ລະດັບສູງ.

**(ພາບ: ນາງ ຖາວັນ ແສງອາລຸນ ຂ່າວ: ເອື້ອ ມະໂນສິງ)**

## ຮອງປະທານ...

(ຕໍ່ຈາກໜ້າ 2)

ອົງການ UNDP ໄດ້ສະໜັບສະໜູນການສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ໃນໂຄງການການສະໜັບສະໜູນຍຸດທະສາດເພື່ອຍົກສູງບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼືNASSP ນັບຕັ້ງແຕ່ປີ2024 ເປັນຕົ້ນມາ, ໂຄງການດັ່ງກ່າວໄດ້ໃຫ້ການສະໜັບສະໜູນຫຼາຍໆກິດຈະກໍາໃນການເຝິກອົບຮົມ ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍສະເພາະການ ຈັດຕັ້ງປະຕິບັດພາລະບົດບາດນິຕິບັນຍັດ ແລະການຕິດຕາມກວດກາຂອງ ສພຊ ແລະ ສພຂ ໃຫ້ມີປະສິດທິພາບແລະປະສິດທິຜົນສູງຂຶ້ນກວ່າເກົ່າ.

ທ່ານຮອງປະທານສະພາແຫ່ງຊາດ ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການສະໜັບສະໜູນຂອງອົງການ UNDP ໃນໄລຍະຜ່ານມາກໍຄືແຜນການສະໜັບສະໜູນແກ່ສະພາແຫ່ງຊາດລາວໃນຕໍ່ໜ້າ ໂດຍສະເພາະແມ່ນການຊ່ວຍເຫຼືອພາຍໃຕ້ໂຄງການສ້າງຂີດຄວາມສາມາດແລະປະສິດທິພາບໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPs) ທີ່ໄດ້ຈັດຕັ້ງປະຕິບັດຮ່ວມກັບສະພາແຫ່ງຊາດລາວໃນປັດຈຸບັນ;ພ້ອມທັງແຈ້ງໃຫ້ຊາບວ່າ ໃນປີນີ້ ສປປ ລາວ ໄດ້ຮັບກຽດເປັນປະທານອາຊຽນ ແລະສະພາແຫ່ງຊາດລາວ ກໍໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາຫວ່າງຊາດອາຊຽນ(AIPA) ຄັ້ງທີ 45 ເຊິ່ງຈະຈັດຂຶ້ນໃນເດືອນຕຸລາ ທີ່ນະຄອນຫຼວງວຽງຈັນ, ຫວັງຢ່າງຍິ່ງວ່າຈະໄດ້ຮັບການສະໜັບສະໜູນຈາກອົງການ UNDP ໃນການເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວ ກໍຄືການປະຕິບັດພັນ ທະສາກົນໃຫ້ສໍາເລັດຢ່າງຈົບງາມ.

ທ່ານ ຄຣິດສະໂຕບເຟີ ບາຊູເອ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງທີ່ທ່ານຮອງປະທານສະພາແຫ່ງຊາດ ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຄໍາເວົ້າອັນຈົບງາມຕໍ່ການປະກອບສ່ວນສະໜັບສະໜູນລັດຖະບານ ແລະ ສະພາແຫ່ງຊາດລາວ ຂອງອົງການUNDP, ພ້ອມທັງແຈ້ງໃຫ້ຊາບສະພາບການເຄື່ອນໄຫວທີ່ຕັ້ງໜ້າຂອງອົງການສະຫະປະຊາຊາດເພື່ອການພັດທະນາ ໃນການປະຕິບັດພາລະບົດບາດປະຈໍາພາກພື້ນອາຊີ-ປາຊີຟິກ ແລະ ຈຸດປະສົງຂອງການຢ້ຽມຢາມ ສປປ ລາວ ຄັ້ງນີ້.

**(ສອນສັກ ວັນວິໄຊ)**

## ປະທານ...

(ຕໍ່ຈາກໜ້າ 3)

ງານລະຫວ່າງສອງປະເທດ, ສອງອົງການນິຕິບັນຍັດ ເວົ້າລວມ, ເວົ້າສະເພາະແມ່ນລະຫວ່າງສອງກໍາມາທິການໃຫ້ນັບມື້ເຕີບໃຫຍ່ເຂັ້ມແຂງ ແລະ ເຂົ້າສູ່ລວງເລິກ ທັງເປັນການສືບຕໍ່ເສີມຂະຫຍາຍສາຍພົວ ພັນການທູດ ເຊິ່ງກໍໄດ້ມີການຜັດປ່ຽນຄະນະຜູ້ແທນຂັ້ນສູງໃນການໄປ-ມາ ເພື່ອຢ້ຽມຢາມ ແລະ ເຮັດວຽກຮ່ວມກັນມາແລ້ວຫຼາຍຄະນະ; ຕະຫຼອດໄລຍະທີ່ຜ່ານມາ ສ.ເກົາຫຼີ ກໍໄດ້ມີການຊ່ວຍເຫຼືອສະໜັບສະໜູນແກ່ ສປປ ລາວ ກໍຄືສະພາແຫ່ງຊາດລາວ ໃນການປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ທ່ານປະທານ ກວທສ ຍັງໄດ້ສະແດງຄວາມຂອບໃຈອີກຄັ້ງຕໍ່ລັດຖະບານແລະປະຊາຊົນ ສ.ເກົາຫຼີ ທີ່ ໃຫ້ການສະໜັບສະໜູນຊ່ວຍເຫຼືອດ້ານງົບປະມານ ປຸກສ້າງໂຮງໝໍຂອງມະຫາວິທະຍາໄລສຸຂະພາບຂອງສປປລາວ. ສ. ເກົາຫຼີເປັນປະເທດໜຶ່ງທີ່ຮອງຮັບແຮງງານລາວໃຫ້ໄດ້ໄປເຮັດວຽກ ໂດຍມີຄ່າແຮງງານທີ່ສູງ ແລະ ມີສະຫວັດດີການສັງຄົມທີ່ດີ ເຊິ່ງສາມາດແກ້ໄຂຄວາມທຸກຍາກໃຫ້ແກ່ປະຊາຊົນລາວໄດ້ພໍສົມຄວນ; ພ້ອມນັ້ນ, ຍັງໄດ້ປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ ເປັນຕົ້ນແມ່ນຂົງເຂດສຶກສາ, ສາທາລະນະສຸກ, ແຮງງານ ແລະ ຂົງເຂດອື່ນໆ ຖືວ່າ ມີຜົນສໍາເລັດທີ່ດີ.

ທ່ານ ນາງ ຊູ ຈຸງ ຊຸກ ໄດ້ສະແດງຄວາມຂອບໃຈຕໍ່ປະທານກໍາມາທິການວັດທະນະທໍາ-ສັງຄົມ ທີ່ໄດ້ໃຫ້ການ ຕ້ອນຮັບອັນອົບອຸ່ນ ແລະ ໃຫ້ຄໍາໝັ້ນວ່າຈະສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນມິດຕະພາບແລະການຮ່ວມມືອັນດີງາມລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ທີ່ມີມາແລ້ວນັ້ນ ໃຫ້ສືບຕໍ່ໄດ້ຮັບການເສີມຂະຫຍາຍ ແລະ ເປັນຮູບປະທໍາຍິ່ງໆຂຶ້ນ ໂດຍສະເພາະຂົງເຂດວັດທະນະທໍາ-ສັງຄົມ ເປັນຕົ້ນ: ຂະແໜງການສຶກສາ, ສາທາລະນະສຸກ, ແຮງງານແລະສະຫວັດດີການສັງຄົມ, ຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວໃຫ້ໄດ້ຮັບປະສິດທິຜົນສູງເປັນກ້າວໆ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ຍົກລະດັບ...

(ຕໍ່ຈາກໜ້າ 3)

ວັນທີ 29-30 ມີນາ 2024 ໂດຍການເປັນປະທານຂອງທ່ານ ສິງຄໍາ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ.

ຊຸດເຝິກອົບຮົມໄດ້ສຸມໃສ່ຮຽນຮູ້ດ້ານທິດສະດີ, ຄົ້ນຄວ້າແລກປ່ຽນສົນທະນາ ແລະ ຈັດຕັ້ງແບ່ງກຸ່ມເພື່ອລົງເລິກເຝິກຫັດຕົວຈິງຕໍ່ບັນດາເນື້ອໃນກ່ຽວກັບບົດຮຽນໃນການກະກຽມບົດພົບປະປະຊາຊົນ ແລະ ການຮ່າງບົດລາຍງານພາຍຫຼັງລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ, ບົດຮຽນໃນການຂຽນບົດຄໍາເຫັນໃນການພົບປະສອງຝ່າຍ ແລະ ຫຼາຍຝ່າຍ, ບົດຮຽນວຽກງານພິທີການທູດ ເຊິ່ງຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າແລກປ່ຽນບົດຮຽນຕໍ່ບັນດາເນື້ອໃນທີ່ນໍາມາແລກປ່ຽນກັນຢ່າງຟົດຟື້ນ, ສ້າງສັນ, ກ້າສະແດງອອກ, ແລກປ່ຽນບົດຮຽນທິດສະດີ ແລະ ສົມທຽບໃສ່ກັບການປະຕິບັດວຽກງານຕົວຈິງຂອງຕົນ; ພ້ອມນັ້ນ, ກໍໄດ້ສົນທະນາແລກປ່ຽນບົດຮຽນປະສົບການຕົວຈິງທີ່ຕົນເອງໄດ້ປະສົບພົບພໍ້ມາ ໂດຍສະເພາະແມ່ນການເປັນເລຂານຸການ, ສິ່ງທີ່ໄດ້ຮຽນຮູ້ຈາກບັນດາທ່ານການນໍາຂອງຕົນ ເຊັ່ນ: ຄຸນສົມບັດ, ທັດສະນະຄະຕິ, ແບບແຜນວິທີເຮັດວຽກ, ການນໍາພາ-ຊີ້ນໍາ, ວິທີຂີດຂຽນ, ທັກສະໃນການບໍລິຫານເວລາ ແລະ ອື່ນໆ ລ້ວນແຕ່ເປັນຄຸນຄ່າໃຫ້ແກ່ການປະຕິບັດໜ້າທີ່ເພື່ອກ້າວໄປສູ່ການເປັນຜູ້ບໍລິຫານ, ຜູ້ນໍາພາ ເຊິ່ງປັດຈຸບັນຫຼາຍທ່ານກໍກາຍເປັນພະນັກງານຄຸ້ມຄອງຂັ້ນກົມ, ຂັ້ນພະແນກ ຫຼື ຕໍາແໜ່ງທຽບເທົ່າຂັ້ນພະແນກແລ້ວ; ນອກຈາກນັ້ນ, ຍັງໄດ້ຍົກບັນຫາທີ່ນອນຢູ່ໃນຄວາມຮັບຜິດຊອບ, ສິດ ແລະ ໜ້າທີ່ຂອງຕົນ ມາແລກປ່ຽນບົດຮຽນ ແລະ ສະເໜີຕໍ່ການຈັດຕັ້ງ ເພື່ອຮັບປະກັນຄວາມເຂົ້າໃຈຖືກຕ້ອງສອດຄ່ອງກັບນິຕິກໍາວາງອອກ ແລະ ສະພາບຄວາມເປັນຈິງຂອງວຽກງານສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໃນໄລຍະໃໝ່.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ເຊິ່ງມີບັນດາທ່ານວິທະຍາກອນຜູ້ຊົງຄຸນວຸດທິຈາກກໍາມາທິການວຽກງານສະມາຊິກສະພາແຫ່ງຊາດ, ກົມພົວພັນລັດຖະສະພາສອງຝ່າຍ ກໍາມາທິການການຕ່າງປະເທດ ແລະ ກະຊວງການຕ່າງປະເທດ; ບັນດາສໍາມະນາກອນທີ່ເປັນເລຂານຸການການນໍາພາຍໃນ ສພຊ, ເລຂານຸການບັນດາທ່ານປະທານ-ຮອງປະທານ ສພຂ 18 ແຂວງທົ່ວປະເທດ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

**(ນາງ ປາກາລັກ ພົມມີໄຊ)**




# ຄາຖາແກ້ທຸກ

\# ຕົ້ນກົບເມກ

ຄວາມທຸກ-ທຸກຈົນຂາດຊັບສິນມາລ້ຽງຊີວິດ ເປັນບັນຫາສຳຄັນທີ່ເຮັດໃຫ້ບາງຄົນທໍ້ແທ້ສິ້ນຫວັງ ຫຼື ສູນເສຍອະນາຄົດ, ບໍ່ມີເງິນຈ່າຍຄ່າຮຽນ-ອອກໂຮງຮຽນ ເພື່ອຫາລ້ຽງຊີບໃຫ້ຢູ່ລອດ ເຊິ່ງບັນຫາບາງປະເພດ ຢ່າລືມວ່າມັນເກີດມາຈາກກົນໄກ ຫຼື ໂຄງສ້າງຂອງສັງຄົມ ທີ່ສອດສານ ກ່ອມເກົ່າມາດົນນານເພາະກົນໄກສັງຄົມບາງປະເພດ ຊັກນຳໃຫ້ຜູ້ມີກຳລັງຊັບໄດ້ປຽບຜູ້ບໍ່ມີ ອາດນຳມາສູ່ຮູບແບບການກົດກັນໄປໃນໂຕ ພາໃຫ້ຊ່ອງວ່າງຄົນ ມີຖານະຫ່າງກັນໄປເລື້ອຍໆ.

ພະພຸດທະເຈົ້າເຄີຍກ່າວໄວ້ວ່າ: ຄົນຈົນບໍ່ມີຊັບ ຍ່ອມກູ້ໜີ້ ເຖິງແມ່ນຮູ້ຢູ່ວ່າ ການເປັນໜີ້ເປັນທຸກກໍຕາມ, ຮູ້ວ່າຕ້ອງເສຍດອກເບ້ຍກໍຕ້ອງຍອມ ເພາະມີຄວາມຈຳເປັນໃຫ້ຊີວິດຢູ່ລອດ, ປັດໄຈ 4 ຄື: ອາຫານ, ເຄື່ອງນຸ່ງຫົ່ມ, ຢາປົວພະຍາດ, ທີ່ຢູ່ອາໄສນັ້ນເປັນຂອງຈຳເປັນຄົນເຮົາຕໍ່ສູ້ອຸປະສັກ ກໍເພື່ອປັດໄຈເຫຼົ່ານັ້ນ ຖ້າຄົນເຮົາຂາດບາງປັດໄຈຂ້າງເທິງກໍຖືວ່າທຸກຈົນຕ້ອງໄດ້ຕໍ່ສູ້-ສະແຫວງຫາໃຫ້ໄດ້ມາລ້ຽງຊີວິດ, ພະພຸດທະເຈົ້າເນັ້ນວິທີແກ້ບັນຫາ ໃຫ້ໃຊ້ສະຕິປັນຍາ-ເພິ່ງຕົນເອງເປັນຫຼັກ ດ້ວຍຫຼັກການທີ່ໜຶ່ງຄື ຂະຫຍັນອົດທົນເພິ່ງຕົນເອງກ່ອນ ບໍ່ແມ່ນວ່າຍາມໃດກໍຈະຮຽກຮ້ອງໃຫ້ຄົນອື່ນຊ່ວຍຕະຫຼອດເວລາ ຂະຫຍັນອົດທົນ, ປະຢັດຄືກັບເຜິ້ງເຮັດຮັງ ຄ່ອຍກໍ່ຮ່າງສ້າງຕົວ ເທື່ອລະກ້າວສຸດທ້າຍໄດ້ຮັງໃຫຍ່ສວຍງາມ. ຫຼັກການທີ 2 ຄື: ສອນໃຫ້ຮູ້ຈັກ ບໍລິຫານລາຍໄດ້ໃຫ້ເປັນ ແບ່ງໃຊ້ຈ່າຍ, ປະຢັດອົດອອມ, ຮູ້ຈັກຊັ່ງຊາສະຕິປັນຍາ ແລະ ກຳລັງຂອງຕົນ ບໍ່ທຸ້ມເທຈົນໝົດກຳລັງ ພາໃຫ້ເຈັບປ່ວຍ ໝາຍຄວາມວ່າ ໃຫ້ຍຶດຫຼັກ ນົກນ້ອຍໃຫ້ສ້າງຮັງເໝາະກັບຕົນ, ເພິ່ງຕົນເອງ ແລະບໍ່ດູໝິ່ນເງິນນ້ອຍ ຄອຍແຕ່ວາດສະໜາເພາະວາດສະໜາຊີວິດເຮົາຕ້ອງສ້າງມັນຈາກມືຂອງເຮົາ.

ສະຫຼຸບຄາຖາສູ້ຊີວິດຄື: ຫຼັກການເພິ່ງຕົນເອງ-ຂະຫຍັນປະຢັດ, ຮູ້ຈັກແບ່ງໃຊ້ຈ່າຍຕໍ່ສິ່ງຈຳເປັນ, ບໍ່ຫຼົງຕົນເອງເຫີ່ຕາມກະແສມັນຊິທຸກພາຍຫຼັງ.






# ຄຳຊໍ້າ – ເຄື່ອງໝາຍຊໍ້າ ແລະ ຄຳອອກສຽງຊໍ້າແຕ່ບໍ່ໝາຍຊໍ້າ

ຄຳຊໍ້າ ແມ່ນຄຳທີ່ນຳເອົາຄຳເຄົ້າລາວເດີມທີ່ເປັນຄຳດຽວກັນ ແລະ ມີຄວາມໝາຍຄືກັນມາປະສົມກັນ ເພື່ອເຮັດໃຫ້ຄຳນັ້ນມີຄວາມໝາຍໜັກແໜ້ນຂຶ້ນຕື່ມ. ຄຳຊໍ້າບໍ່ຂຽນສອງຄຳຕໍ່ກັນ ແຕ່ຈະໃຊ້ເຄື່ອງໝາຍຊໍ້າ “ໆ” ເຊັ່ນ ດຳໆ, ແດງໆ, ຮູນໆ, ໄວໆ, ມ່ວນໆ, ງາມໆ, ດີໆ ຯລຯ.

ບາງກໍລະນີ ຄຳທີ່ອອກສຽງຊໍ້າກັນ ແຕ່ບໍ່ໃຫ້ໃຊ້ໝາຍຊໍ້າ ເຊັ່ນ ‘ນານາ’ ເຊິ່ງເປັນຄຳເຄົ້າປາລີ-ສັນສະກິດ नाना Nānā ໝາຍເຖິງ ຕ່າງໆ, ອື່ນໆ ດັ່ງຕົວຢ່າງ:

- ຫຼານຂອງພໍ່ຕູ້ສິຮຽນຢູ່ໂຮງຮຽນນານາຊາດ.
- ນັກທ່ອງທ່ຽວຈາກນານາປະເທດມັກມາທ່ຽວນະຄອນຫຼວງພະບາງ.
- ສປປ ລາວ ມີຄວາມຮັ່ງມີທາງດ້ານຊັບພະຍາກອນທຳມະຊາດ ແລະ ຊີວະນານາພັນ.

ບາງກໍລະນີ ຄຳທີ່ລຽງລຳດັບຕິດກັນຢູ່ໃນຂໍ້ຄວາມໃດໜຶ່ງ ມີສຽງ ແລະຄວາມໝາຍຄືກັນ ຕ່າງແຕ່ວ່າຄຳທີ່ຢູ່ທາງໜ້ານັ້ນເປັນພາກສ່ວນໜຶ່ງຂອງຄຳອື່ນແມ່ນບໍ່ໃຫ້ໃຊ້ໝາຍຊໍ້າ ເຊັ່ນ

- ນາຍບ້ານບ້ານຄຳຮຸ່ງ (‘ບ້ານ’ ທີ່ຢູ່ທາງໜ້າ ແມ່ນເປັນພາກສ່ວນໜຶ່ງຂອງ ‘ນາຍບ້ານ’, ‘ບ້ານ’ ທີ່ຢູ່ທາງ ຫຼັງ ເປັນພາກສ່ວນໜຶ່ງຂອງ ‘ບ້ານຄຳຮຸ່ງ’) ເຊັ່ນດຽວກັນກັບ ‘ເຈົ້າເມືອງເມືອງໄຊທານີ’, ‘ເຈົ້າແຂວງແຂວງ ວຽງຈັນ.
- ລາວພັກຢູ່ສະຖານທີ່ທີ່ມີຄວາມປອດໄພ. (‘ທີ່’ ທີ່ຢູ່ທາງໜ້າ ເປັນພາກສ່ວນໜຶ່ງຂອງຄຳນາມ ‘ສະຖານທີ່, ‘ທີ່’ ທີ່ຢູ່ທາງຫຼັງ ເປັນຄຳສັບພະນາມໃຊ້ແທນຄຳນາມ)
- ເພິ່ນຊີ້ນຳນຳພາວຽກງານໄດ້ດີ. (‘ນຳ’ ທີ່ຢູ່ທາງໜ້າ ເປັນພາກສ່ວນໜຶ່ງຂອງຄຳກິລິຍາ ‘ຊີ້ນຳ’, ‘ນຳ’ ທີ່ ຢຸ່ທາງຫຼັງ ເປັນພາກສ່ວນໜຶ່ງຂອງຄຳກິລິຍາ ‘ນຳພາ)




# ວິທີເຮັດວຽກ

**ພາກທີ 5**
**ບັນຫາວິທີເຮັດວຽກ**

ລັດຖະບານ ແລະ ພັກ ບໍ່ແມ່ນພຽງແຕ່ເຮັດວຽກການທີ່ເປັນຜົນໃຫ້ແກ່ປະຊາຊົນໂດຍກົງ, ບາງຄັ້ງກໍຍັງເຮັດວຽກການເຊິ່ງຖ້າເບິ່ງຜິວເຜີນແລ້ວ ປະກົດວ່າເສຍຫາຍໃຫ້ປະຊາຊົນຄື: ເລ່ຍລາຍເງິນ, ເກັບພາສີ, ເຮັດການ ມ້າງເພບາງຢ່າງດັ່ງນັ້ນເປັນຕົ້ນ. ພະນັກງານ ແລະ ສະມາຊິກ ບໍ່ເຂົ້າໃຈເຫດຜົນສອງຢ່າງຄື: ເຮັດເພື່ອໃຜ, ຮັບຜິດຊອບຕໍ່ໃຜ, ດັ່ງນັ້ນເມື່ອໄດ້ພົບວຽກການແນວນັ້ນ ກໍບໍ່ຊ່າງຊອກວິທີຊີ້ແຈງໃຫ້ປະຊາຊົນເຂົ້າໃຈ, ສະນັ້ນໃນວຽກການທີ່ເປັນປະໂຫຍດໂດຍກົງໃຫ້ປະຊາຊົນຄືປ້ານຝາຍ, ປ້ານຄູກັນນໍ້າ, ຮັກສາຂົວ, ຮັກສາທາງ, ຮັກສາຄູກັນນໍ້າ, ເພີ່ມພູນຜະລິດຜົນ, ການປະຊາສຶກສາ ແລະ ອື່ນໆ, ເລື່ອງນີ້ບໍ່ເປັນສິ່ງແປກປະຫຼາດຫຍັງໝົດ. ມັນເປັນຄືເອົາເຂົ້າໜົມຫວານຍັດໃສ່ປາກຄົນ. ເຂົ້າໜົມເປັນຂອງແຊບຂອງຫວານທີ່ສຸດ ຖ້າເອົາໄປຍັດໃສ່ປາກເຂົາ ບັງຄັບເຂົາກິນ ໂດຍບໍ່ເຂົ້າໃຈວ່າແມ່ນຫຍັງ, ໃຜກໍ່ຄຶງຄຽດ ແລະ ເປີດໜ່າຍ.

ພວກເຮົາຕ້ອງຈົດຈຳໃສ່ສະໝອງໄວ້ສະເໝີວ່າ: ປະຊາຊົນແມ່ນດີ, ເວລາເຂົາເຈົ້າເຂົ້າໃຈແລ້ວວຽກການຍາກຊາພຽງໃດ ເຂົາເຈົ້າກໍເຮັດໄດ້, ຈະເສຍສະຫຼະພຽງໃດເຂົາເຈົ້າກໍບໍ່ຢ້ານ. ແຕ່ວ່າກ່ອນອື່ນຕ້ອງອົດທົນຊອກວິທີຊີ້ແຈງອະທິບາຍໃຫ້ເຂົາເຈົ້າເຂົ້າໃຈວຽກເຫຼົ່ານັ້ນເປັນອັນນຳຜົນມາໃຫ້ເຂົາເຈົ້າ ແລະ ເປັນສິ່ງທີ່ຄວນເຮັດ.

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

\# ຄູແສງ

| ຖືກ | ຜິດ |
|---|---|
| ຂອກແຄແຈຮົ້ວ | ຄອກແຄແຈຮົ້ວ |
| ຄອກມ້າ | ຂອກມ້າ |
| ຮູ້ສຶກ | ຮູ້ຊຶກ |
| ໃຫ້ຊຶກໆ | ໃຫ້ສຶກໆ |
| ໝາກໄມ້ສຸກ | ໝາກໄມ້ຊຸກ |
| ຊຸກຍູ້ | ສຸກຍູ້ |
| ສຸດທີ່ຮັກ | ຊຸດທີ່ຮັກ |
| ຄົບຊຸດ | ຄົບສຸດ |
| ສຸບໝວກ | ຊຸບໝວກ |
| ຊຸບຜັກ | ສຸບຜັກ |



## ສຸຂະພາບທົ່ວໂລກ

# ປະໂຫຍດຂອງການກິນໝາກໄມ້ໃນຕອນເຊົ້າ

ໂດຍ: ທິວກະທິ



ຊ່ວຍເພີ່ມພະລັງງານໃຫ້ຮ່າງກາຍ: ໝາກໄມ້ຖືເປັນອາຫານຊະນິດໜຶ່ງທີ່ອຸດົມໄປດ້ວຍຄາໂບໄຮເດດ, ໄຟເບີ້ ແລະ ນ້ຳຕານທີ່ຍ່ອຍຊ້າ ເຊິ່ງໝາກໄມ້ຈະຊ່ວຍໃຫ້ຮ່າງກາຍຂອງທ່ານຮູ້ສຶກສົດຊື່ນໄດ້ຕະຫຼອດມື້.

**ກະຕຸ້ນລະບົບຂັບຖ່າຍ:** ຖ້າເຮົາຮັບປະທານໝາກໄມ້ໃນຕອນເຊົ້າ ຈະຊ່ວຍກະຕຸ້ນໃຫ້ລະບົບຂັບຖ່າຍເຮັດວຽກໄດ້ດີຂຶ້ນ ເມື່ອສານພິດຕ່າງໆຖືກຂັບອອກມາຜ່ານການຂັບຖ່າຍແລ້ວຮ່າງກາຍກໍຈະຮູ້ສຶກສົດຊື່ນ.

**ຫຼຸດຜ່ອນຄວາມຄຽດ:** ການກິນໝາກໄມ້ໃນຕອນເຊົ້າຍັງຊ່ວຍໃຫ້ເຮົາຫຼຸດຜ່ອນຄວາມຄຽດລົງໄດ້ ພ້ອມທັງຊ່ວຍຕໍ່ສູ້ໃຫ້ກັບໂຣກໄຂ້ຫວັດ ຖ້າຫາກຮັບປະທານໝາກໄມ້ທີ່ອຸດົມດ້ວຍວິຕາມິນຊີໃນຕອນເຊົ້າ ກໍຈະຊ່ວຍເຮັດໃຫ້ຮ່າງກາຍຂອງທ່ານໄດ້ຮັບນ້ຳຫຼາຍຂຶ້ນ

**ເຮັດໃຫ້ອາລົມດີ:** ໝາກໄມ້ເປັນຕົວເລືອກທີ່ດີ ທີ່ຈະເຮັດໃຫ້ທ່ານຮູ້ສຶກສົດຊື່ນຂຶ້ນ ເພາະນ້ຳຕານຈາກທຳມະຊາດ ແລະ ໄຟເບີ້ທີ່ຢູ່ໃນໝາກໄມ້ຈະຊ່ວຍໃຫ້ເຮົາມີສະມາທິ.

**ເຮັດໃຫ້ຮູ້ສຶກສົດຊື່ນ:** ການຮັບປະທານໝາກໄມ້ທີ່ມີປະລິມານນ້ຳສູງເຊັ່ນ: ໝາກໂມ, ແອັບເປີ້ນ, ໝາກກ້ຽງ, ກີວີ, ໝາກນັດ, ໝາກລາແຊ້ງ ແລະ ໝາກໄມ້ຊະນິດອື່ນໆ ຈະຊ່ວຍໃຫ້ຮ່າງກາຍຂອງທ່ານໄດ້ຮັບນ້ຳຫຼາຍຂຶ້ນ.

**ຂໍ້ມູນຈາກ:**
**www.lnr.org.la**



## ສັກສາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

\# ສາວຈົ້ມ

❊ **ຊົມເຊີຍ** ວັນສ້າງຕັ້ງ ຄະນະ**ຊາວໜຸ່ມປະຊາຊົນປະຕິວັດລາວ**ທີ່ຈະໄດ້ຕ່າວໝູນວຽນມາບັນຈົບຄົບຮອບ 69 ປີ (1/4/1955-1/4/2024) ຂ້ອຍໄສເວທີນີ້ຍື່ນຕ່ອນ ພອນໄຊສົ່ງໄປຫາ ຊາວໜຸ່ມລາວທົ່ວສາຫາ ຢູ່**ເໜືອ-ກາງ-ໃຕ້** ຂໍໃຫ້ມີສຸກລົ້ນ ກາຍໃຈໂດຍດັ່ງ ທັງວຽກງານເດັ່ນກ້າວ ຈະເລີນຊົ້ນລື່ນກວ່າຫຼັງ **ທ່ານເອີຍ!**

❊ **ເບື່ອງ**ໃນໂອກາດ ປີເກົ່າ **(ເຖາະ)** ກະຕ່າຍຫຍັບຍ່າງຍ້າຍ **(ມະໂລງ)** ງູໃຫຍ່ວຽນມາ ຊ່ວງບໍ່າພອນໄຊເພັດພອຍມາຕ້ອນ ທານຄອນ**ເງິນຄ່າແກ້ວ** ມາໂຮຍ**ໂຮມຄົບພອນອ່ານ** ຈົ່ງສຸຂີລື່ນບ້ານ ລອຍລົ້ນຕະຫຼອດໄປ ສ່ວນຜູ້ໃດຫາກໍມາເປີດພໍ້ ກໍໂດຍດັ່ງດຽວກັນ ຂໍໃຫ້ເງິນຄ່າໄຫຼຫຼັ່ງມາໂຮມເຕົ້າ ຢ່າໄດ້ຈົບໝອງເສົ້າ **ແຟນຄ່ລ່າເຮົາທຸກທົບແຫ່ງ** ຈ່າຍຢ່າບົກຈົກຢ່າແຫ້ງເງິນຄ່າລົ້ນອັ່ງຄົງ ທຸກ**ທ່ານເປີ!**

## ຊວນຍິ້ມ

\# ແອ່ນຕຸ້ງ

### ເລື່ອງ: ຊື້ຕາມມັກ

ມື້ເລກອອກ ທ້າວຕຸ້ຍບອກນ້ອງຊາຍໄປຊື້ເລກ

**ທ້າວຕຸ້ຍ:** ຈ່ອຍ ມຶງໄປຊື້ເລກໃຫ້ອ້າຍແດ່ 75 ເດີ, ຄັນມັນເຕັມ ມັກຫຍັງກະຊື້ໂລດ ປະມານ 30 ນາທີຕໍ່ມາທ້າວຈ່ອຍ ກໍມາຮອດ.

**ທ້າວຕຸ້ຍ:** ໄດ້ບໍ່?

**ທ້າວຈ່ອຍ:** ບໍ່ ມັນເຕັມແລ້ວ

**ທ້າວຕຸ້ຍ:** ມຶງຊື້ຫຍັງຊັ້ນ?

**ທ້າວຈ່ອຍ:** ຊື້ໝາກມ່ວງ ກໍສ່ມາກິນກັບເຂົ້າ

**ທ້າວຕຸ້ຍ:** ບັກເອນ ມຶງເອີຍ ກູບອກໃຫ້ຊື້ເລກ

**ທ້າວຈ່ອຍ:** ແນວອ້າຍບອກວ່າ ຄັນບໍ່ມີ 75 ມັກຫຍັງຊື້ໂລດ, ນ້ອງມັກໝາກມ່ວງ ກະເລີຍຊື້ໝາກມ່ວງ ກໍສ່ມາຍັດໃບກ, ນ້ອງບໍ່ໄດ້ມັກເລກ

**ທ້າວຕຸ້ຍ:** !!!



## ຄະຕິເຕືອນໃຈ

\# ດອກຫຍ້າ

ຄັນໄດ້ຟັງຄ່າເວົ້າ
ຊົມໃນໆຢ່າຟ້າວຈົ່ມ
ບາງເທື່ອຊົມຊີ້ເພີ້ຍ
ເມື່ອໜ້າຫາກຊີດີ



## ອາດ ກະວີລາວ

## ຊາວໜຸ່ມລາວຍຸກໃໝ່

\# ເພັດນາລີ ກ້ອມພັນທະວົງ

❊ **ຊາວ** ຊຸມຮາມຮຸ່ນນ້ອຍ ໄວເຫີ່ມຫັນມັງ
**ໜຸ່ມ** ກຳລັງມີຫຼາຍ ເຫື່ອແຮງແຂງກ້າ
**ປຽບ** ອາຊາໄນມ້າ ວັງຊາເຫຼືອຫຼາກ
**ເໝືອນ** ແນວກົກຮາກແກ້ວ ຝັງແໜ້ນບໍ່ຄອນ ເພິ່ນວ່າ !

❊ **ນົກ** ບໍ່ເຄີຍຢ່ອນຢ້ານ ເກງກຽດກົວບິນ ດອກນາ
**ອິນ** ພົມແດນນະພາ ທ່ອງທຽວສວານແສ້ວ
**ຊີ** ວັງແນແນມແລ້ວ ແລວທາງກາງຕໍ່
**ທີ່** ມີເຫຍື່ອຫຼູ່ລ້ຽງ ກິນກຸ້ມຊີບກາຍ ພຸ້ນແລ້ວ !

❊ **ບໍ່** ອຽງອາຍຢ່ອນຢ້ານ ງານວຽກໜັກເບົາ
**ຫວັ່ນ** ໄຫວຄອນແຄນລື ບໍ່ເຄີຍຈາອ້າງ
**ກົວ** ຢ້ານພົງພັນເຊື້ອ ປະສົບຄວາມລຳບາກ
**ຕໍ່** ໃຫ້ແສນຍາກຫຍຸ້ງ ຊາວໜຸ່ມລາວບໍ່ຢ້ານ ຫັນຫ້າວຕະລຸມບອນ !

❊ **ພາ** ຊາດຫາຍທຸກຮ້ອນ ຫັນສູ່ສັນຕິສຸກ
**ຍຸ** ຍໍຄວາມຈະເລີນ ສູ່ຊາວເມືອງບ້ານ
**ລົມ** ແນວສຳພັນສ້າງ ເດີນທະເລແຮກສ່ຽວ
**ແດງ** ສະບັດອາດເອ້ ພາຍໃຕ້ຮົ່ມທຸງ ຊອບແລ້ວ !

❊ **ຈິ່ງ** ທຳແນວພັກຊີ້ ຜັນອອກເປັນຈິງ
**ເປັນ** ເສນາທິການ ແກ່ນສານກົກເຄົ້າ
**ສືບ** ທຳພຽນເປັນເບົ້າ ເຝິກຝົນຫຼອມຫຼໍ່
**ໄຊ** ຊະນະລາວເອກອ້າງ ຫຼາຍບັ້ນສືບຕາມ

❊ **ຂອງ** ເດີມດາເກົ່າກີ້ ມີມາກມໍລະດົກ
**ຍຸກ** ກົກເຫຼົ່າຕາຍາຍ ມອບໝາຍວາງໄວ້
**ສະ** ສົມເປັນມູນໃຫ້ ຫຼານເຫຼັນສານຕໍ່
**ໄໝ** ທໍຫູກຕ່ຳຜ້າ ວັດທະນະທຳຫຼາກລ້ຳ ຂໍໃຫ້ຮັກສາ ແທ້ເນີ !



ລັດຖະສະພາຕ່າງປະເທດ

# ລັດຖະສະພາມານຕາ ຮັບຮອງປະທານາທິບໍດີຄົນໃໝ່



ເວັບໄຊຂ່າວສານຊິນຮວາ ລາຍງານວ່າ: ລັດຖະສະພາແຫ່ງ ສາທາລະນະລັດມານຕາ ໄດ້ມີມະຕິຢ່າງເອກະສັນຮັບຮອງເອົາທ່ານ ມີຣຽມ ສະປີເຕຣີ ເດໂບໂນ (Myriam Spiteri Debono) ເປັນປະທານາທິບໍດີຄົນໃໝ່ຂອງປະເທດ ເມື່ອວັນພຸດທີ 27 ມີນາຜ່ານມາ.

ທ່ານ ສະປີເຕຣີ ເດໂບໂນ ອາຍຸ 71 ປີ ຈະເຂົ້າມາແທນປະທານາທິບໍດີ ຈອດຈ໌ ເວວລາ (George Vella) ເຊິ່ງໝົດວາລະການດຳລົງຕຳແໜ່ງ 5 ປີ ໃນວັນທີ 4 ເມສາ 2024, ທ່ານ ສະປີເຕຣີ ເດໂບໂນ ຈະເປັນປະທານາທິບໍດີຄົນທີ 11 ຂອງມານຕາ.

ນີ້ແມ່ນຄັ້ງທຳອິດໃນປະຫວັດສາດຂອງມານຕາ ທີ່ມີການເລືອກຕັ້ງປະທານາທິບໍດີຄົນໃໝ່ໂດຍຜ່ານຍັດຕິຂອງລັດຖະສະພາທີ່ຕ້ອງການສຽງສ່ວນຫຼາຍສອງສ່ວນສາມ, ຕາມການປັ່ງແປງລັດຖະທຳມະນູນຂອງປະເທດໃນປີ 2020.

ທ່ານ ສະປີເຕຣີ ເດໂບໂນ ຜູ້ທີ່ຈະເປັນປະທານາທິບໍດີເພດຍິງຄົນທີ 3 ໄດ້ຖືກສະເໜີຊື່ໂດຍທ່ານນາຍົກລັດຖະມົນຕີ ໂຣເບີດ ອາເບລາ (Robert Abela) ແລະ ໄດ້ຮັບການສະໜັບສະໜູນຈາກຜູ້ນຳຝ່າຍຄ້ານທ່ານ ເບີນາດ ເກຣດຊ໌ (Bernard Grech).

# ຟລໍຣິດາ ຜ່ານກົດໝາຍຈຳກັດ ການເຂົ້າເຖິງສື່ສັງຄົມຂອງເຍົາວະຊົນ

*ລັດຟລໍຣິດາ (Florida) ຂອງສະຫະລັດອາເມລິກາ ຈະມີກົດໝາຍຫ້າມເຍົາວະຊົນນຳໃຊ້ສື່ສັງຄົມອອນລາຍ ສະບັບທີ່ເຂັ້ມງວດທີ່ສຸດຂອງປະເທດ ຫຼັງຈາກທ່ານ ຣອນ ເດີຊານທິສ (Ron DeSantis) ເຈົ້າຄອງລັດຟລໍຣິດາ ລົງນາມອະນຸມັດກົດໝາຍດັ່ງກ່າວ.*

ສຳນັກຂ່າວ AP ລາຍງານຈາກເມືອງແທວລາແຮດສ໌ຊີ (Tallahassee) ລັດຟລໍຣິດາ, ສະຫະລັດອາເມລິກາ ເມື່ອວັນທີ 26 ມີນາຜ່ານມາວ່າ ກົດໝາຍດັ່ງກ່າວ ເຊິ່ງຈະມີຜົນບັງຄັບໃຊ້ເລີ່ມຕັ້ງແຕ່ວັນທີ 01 ມັງກອນ 2025 ຈະຫ້າມບັນຊີສື່ສັງຄົມອອນລາຍສຳລັບເດັກທີ່ມີອາຍຸຕ່ຳກວ່າ 14 ປີ, ສ່ວນເຍົາວະຊົນອາຍຸ 14-15 ປີ ຈະຕ້ອງໄດ້ຮັບອະນຸຍາດຈາກພໍ່ແມ່ກ່ອນທີ່ຈະໃຊ້ສື່ອອນລາຍຕ່າງໆ.

"ເດັກໃນໄວອາຍຸທີ່ມີການພັດທະນາທາງສະໝອງ ບໍ່ມີຄວາມສາມາດໃນການຮູ້ວ່າພວກເຂົາກຳລັງຖືກດຶງເຂົ້າໄປສູ່ເຕັກໂນໂລຊີທີ່ເຮັດໃຫ້ເສບຕິດເຫຼົ່ານີ້ ລວມທັງເຫັນໄພອັນຕະລາຍ ແລະ ກ້າວອອກຫ່າງຈາກມັນ; ດັ່ງນັ້ນ, ພວກເຮົາຕ້ອງກ້າວເຂົ້າໄປຊ່ວຍເຫຼືອພວກເຂົາ." ທ່ານ ພອນ ເຣນເນີ (Paul Renner) ປະທານສະພາຜູ້ແທນລາສະດອນລັດຟລໍຣິດາ ກ່າວຄຳເຫັນໃນພິທີລົງນາມຮັບຮອງກົດໝາຍທີ່ໂຮງຮຽນແຫ່ງໜຶ່ງໃນເມືອງແຈັກສັນວິວລ໌ (Jacksonville).




# ຮອງປະທານສະພາແຫ່ງຊາດ ອາຟຣິກາໃຕ້ ຈະຮັກສາການລະຫວ່າງປະທານ "ລາພັກພິເສດ"




**ທ່ານ ນາງ ໂນຊີວີເວ ມາປີຊາ-ນະກາກູລາ**

ລັດຖະສະພາອາຟຣິກາໃຕ້ ໄດ້ຖະແຫຼງການໃນຕອນເດິກຂອງວັນເສົາທີ 23 ມີນາຜ່ານມາວ່າ ທ່ານ ເລເຊຊາ ເຊໂນລີ (Lechesa Tsenoli) ຮອງປະທານສະພາແຫ່ງຊາດ (ສະພາຕ່ຳ) ຈະດຳລົງຕຳແໜ່ງຮັກສາການປະທານສະພາແຫ່ງຊາດໃນລະຫວ່າງທີ່ປະທານສະພາແຫ່ງຊາດ "ລາພັກພິເສດ" (special leave) ຈາກໜ້າທີ່ຂອງນາງ.

ທ່ານ ນາງ ໂນຊີວີເວ ມາປີຊາ-ນະກາກູລາ (Nosiviwe Mapisa-Nqakula) ປະທານສະພາແຫ່ງຊາດຄົນປັດຈຸບັນ ມີສ່ວນພົວພັນໃນຂໍ້ກ່າວຫາເລື່ອງການສໍ້ລາດບັງຫຼວງທີ່ກ່ຽວຂ້ອງກັບເງິນຫຼາຍກວ່າ 2,3 ລ້ານແຣນ (rand) ຫຼືປະມານ 120.000 ໂດລາສະຫະລັດ, ເຊິ່ງຍ້ອນກັບໄປໃນໄລຍະທີ່ນາງດຳລົງຕຳແໜ່ງເປັນລັດຖະມົນຕີກະຊວງປ້ອງກັນປະເທດ ລະຫວ່າງປີ 2016-2019.

ທ່ານ ມາປີຊາ-ນະກາກູລາ ໄດ້ປະກາດໃນຕອນແລງວັນພະຫັດທີ 21 ມີນາຜ່ານມາວ່າ ນາງຈະລາພັກພິເສດ ຈາກຕຳແໜ່ງຂອງນາງ, "ມີຜົນໂດຍທັນທີ".

ທ່ານ ນາງ ໂນຊີວີເວ ມາປີຊາ-ນະກາກູລາ, ນັກຮົບເກົ່າອາຍຸ 67 ປີ ຈາກພັກສະມັດຊາແຫ່ງຊາດອາຟຣິກາ (African National Congress-ANC) ພັກກຳອຳນາດປັດຈຸບັນ, ເຄີຍເປັນລັດຖະມົນຕີກະຊວງປ້ອງກັນປະເທດຂອງອາຟຣິກາໃຕ້ ລະຫວ່າງປີ 2012-2021.

**ແຫຼ່ງຂ່າວ: ຊິນຮວາ**

# ທ່ານ Aguiar-Branco ໄດ້ຮັບເລືອກຕັ້ງ ເປັນປະທານສະພາແຫ່ງຊາດປອກຕຸຍການ



ວັນພຸດທີ 27 ມີນາ 2024 ທ່ານ ໂຄເຊ ເປໂດຣອາກີອາຣ໌-ບຣັງໂກ (Jose Pedro Aguiar-Branco) ຮອງຫົວໜ້າພັກສັງຄົມປະຊາທິປະໄຕ ໄດ້ຮັບເລືອກຕັ້ງເປັນປະທານສະພາແຫ່ງຊາດປອກຕຸຍການ ໃນການລົງຄະແນນສຽງຮອບທີ 4 ເຊິ່ງທ່ານໄດ້ຮັບ 160 ສຽງ ໃນສະພາແຫ່ງຊາດທີ່ມີທັງໝົດ 230 ທີ່ນັ່ງ.

ຫຼັງຈາກຄວາມພະຍາຍາມສາມຄັ້ງທີ່ລົ້ມເຫຼວໃນການເລືອກຕັ້ງປະທານສະພາແຫ່ງຊາດເມື່ອວັນອັງຄານທີ 27 ມີນາ, ພັກສັງຄົມນິຍົມ ແລະ ພັກສັງຄົມປະຊາທິປະໄຕ ສອງພັກທີ່ມີຜູ້ແທນໄດ້ຮັບເລືອກຕັ້ງຫຼາຍທີ່ສຸດໃນການເລືອກຕັ້ງທີ່ຈັດຂຶ້ນເມື່ອວັນທີ 10 ມີນາຜ່ານມາ ໄດ້ບັນລຸຂໍ້ຕົກລົງທີ່ຈະແບ່ງປັນການນຳພາໃນສະພາແຫ່ງຊາດ.

ທ່ານ ອາກີອາຣ໌-ບຣັງໂກ ເປັນທະນາຍຄວາມ ແລະ ເຄີຍດຳລົງຕຳແໜ່ງລັດຖະມົນຕີກະຊວງຍຸຕິທຳແລະລັດຖະມົນຕີກະຊວງປ້ອງກັນປະເທດມາກ່ອນ.

**ແຫຼ່ງຂ່າວ: ຊິນຮວາ**



ທະນາຄານພັດທະນາລາວ
LDB Bank

ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ພິກແຜ່ນດິນ ປີ້ນແຜ່ນຟ້າ ຕາມລ່າພວກສໍ້ໂກງ

ພາຍໃຕ້ຫົວຂໍ້ຂອງບົດນີ້ ມີເລື່ອງຈະມາເລົ່າໃຫ້ຟັງກ່ຽວກັບມູມໜຶ່ງຂອງສະໜາມຮົບຕ້ານການສໍ້ຫຼາດບັງຫຼວງ, ພວກໂກງບ້ານກິນເມືອງ ທີ່ມາໃນຄາບພະນັກງານຜູ້ຊີງກຽດຂອງລັດແລະນັກທຸລະກິດຢູ່ສປຈີນ. ນອກນັ້ນກໍຈະຕໍ່ໃສ່ຂ່າວມະຍິກມະຍ່ອຍ ແຕ່ບໍ່ດ້ອຍບົດຮຽນຈາກຈີນເຊັ່ນກັນ.

ເປັນທີ່ຊາບກັນຢ່າງກວ້າງຂວາງແລ້ວວ່າ ໃນຊຸມປີຫຼັງໆມານີ້ ສະໜາມຮົບຕ້ານພະຍາດຟຸມເຟືອຍ ແລະ ໄພສໍ້ຫຼາດບັງຫຼວງຢູ່ ສປຈີນ ໄດ້ດຳເນີນໄປຢ່າງດຸເດືອດ ນັບແຕ່ຂັ້ນສູນກາງລົງຮອດຂອກແຄແຈຮົ້ວໃນຂັ້ນຮາກຖານ. ພາຍໃຕ້ຄຳຂວັນ"ຈະເປັນເສືອຫຼືແມງວັນກໍບໍ່ໄວ້ໜ້າ" ຄຳຂວັນນີ້ ມີຄວາມໝາຍວ່າ ບຸກຄົນ ຫຼື ພະນັກງານສໍ້ລາດບັງຫຼວງ ເຖິງຈະໃຫຍ່ຄັບຟ້າ ມີອຳນາດເໜືອເທວະດາ ຫຼື ຈະເປັນບຸກຄົນກໍຄືພະນັກງານທີ່ມີຖານະເຕ້ຍຕ່ຳຈຳດິນກໍຕາມ... ຖ້າພົວພັນກັບການສໍ້ລາດບັງຫຼວງແລ້ວກໍຈະບໍ່ໄວ້ໜ້າ. ດັ່ງນັ້ນ, ຈຶ່ງບໍ່ແປກທີ່ມີຂ່າວອອກມາອ່າວຖີ່ ກ່ຽວກັບການຕັດສິນຄະດີ ທຸດຈະລິດ-ສໍ້ລາດບັງຫຼວງ ທີ່ຜູ້ມີອຳນາດຂັ້ນສູງຈຳນວນບໍ່ໜ້ອຍໄດ້ຕົກຕັ່ງຍ້ອນເປັນແຖວ. ຈຸດໜຶ່ງທີ່ຢາກຍົກຂຶ້ນມາເປັນຕົວຢ່າງກໍຄື ສະໜາມຮົບຕ້ານການສໍ້ລາດບັງຫຼວງຢູ່ຈີນນັ້ນ ດຳເນີນໄປພ້ອມໆກັນ ທັງຢູ່ພາຍໃນ ແລະຢູ່ນອກປະເທດ ການປາບປາມພະຍາດສໍ້ລາດບັງຫຼວງແບບບໍ່ໄວ້ໜ້າຢູ່ຈີນນັ້ນ ໄດ້ກົດດັນໃຫ້ພວກສວຍໂອກາດ ໂກງບ້ານກິນເມືອງຈຳນວນໜຶ່ງເຕັ້ນໂຕນໂຍນໜີ ເພື່ອລົບຫຼີກຂະບວນຍຸຕິທຳ ແລະ ເພື່ອໄປສະເຫວີຍສຸກ ກັບກອງເງິນທີ່ປຸ້ນໄປຈາກປະຊາຊົນ. ແຕ່ແລ້ວ ຄວາມຝັນຫວານຂອງພວກເຂົາກໍພົບກັບທາງຕັນ. ເລີ່ມແຕ່ປີ 2015, ຄະນະກຳມາທິການປະສານງານຂັ້ນສູນກາງຂອງຈີນ ເພື່ອຕ້ານໄພສໍ້ລາດບັງຫຼວງ ໄດ້ຈັດຕັ້ງໂຄງການ ສະກາຍເນັດ (Sky Net) ຂຶ້ນ ໂດຍມີການປະສານກັບບັນດາປະເທດ ທີ່ພວກສໍ້ລາດບັງຫຼວງຈາກຈີນ ໃຊ້ເປັນທີ່ກຳບັງ-ເປັນບ່ອນຊຸກເຊື່ອງຊັບສິນທີ່ລັກຫອບໂຕນໄປຈາກປະເທດຊາດ. ໂຄງການ Sky Net ນີ້ມີເປົ້າໝາຍຕາມລ່າພວກສໍ້ລາດບັງຫຼວງທີ່ຫອບເງິນໂຕນໄປລີ້ຢູ່ຕ່າງປະເທດ ໂດຍສະເພາະແມ່ນເພື່ອນຳຈັບ ແລະ ລາກຄໍພວກເຂົາກັບຄືນມາຮັບໂທດຢູ່ປະເທດ ພ້ອມທັງເກັບກູ້ຄືນຊັບສິນເງິນຄຳທີ່ຖືກລັກລອບນຳໄປຊຸກເຊື່ອງຢູ່ຕ່າງປະເທດ. ເວົ້າສະເພາະໃນໄລຍະໃກ້ໆນີ້ ກໍມີຂ່າວອອກມາຈາກຈີນ ໃນຕົ້ນເດືອນມັງກອນ 2024 ນີ້ວ່າ ນັບແຕ່ເດືອນມັງກອນ ຫາ ເດືອນພະຈິກ 2023 ພາຍໃຕ້ໂຄງການ Sky Net, ທາງການຈີນໄດ້ເປີດກວ້າງການຮ່ວມມືກັບບັນດາປະເທດ, ອົງການຈັດຕັ້ງສາກົນ ໂດຍສະເພາະແມ່ນອົງການຕຳຫຼວດສາກົນ ຫຼື ອິນເຕີໂປນ (Interpol) ເພື່ອລ່າຈັບຜູ້ຕິດແຮ້ວຄະດີສໍ້ລາດບັງຫຼວງໃນຈີນ ແລ້ວໂຕນໜີໄປຫຼົບຫຼີກເງື້ອມມືກົດໝາຍຢູ່ຕ່າງປະເທດ. ຂ່າວບອກວ່າໃນໄລຍະດັ່ງກ່າວ (11 ເດືອນໃນປີ 2023) ທາງການຈີນສາມາດລາກຄໍພວກຕິດຄະດີສໍ້ລາດບັງຫຼວງກັບຄືນມາຮັບໂທດໄດ້ທັງໝົດ 1.278 ຄົນ ໃນນັ້ນເປັນອະດີດພະນັກງານລັດຂັ້ນສູງຈຳນວນ 140 ຄົນ ແລະ ພະນັກງານທີ່ເປັນໄມ້ມືອີກຈຳນວນ 48 ຄົນ. ພະນັກງານຫົວໃສໃຈຄົດທີ່ກ່າວມາຂ້າງເທິງນີ້ ແມ່ນບຸກຄົນທີ່ອົງການຕຳຫຼວດສາກົນຕ້ອງການຕົວຫຼາຍທີ່ສຸດ. ຈຳນວນເງິນສໍ້ໂກງທີ່ເກັບກູ້ຄືນມາໄດ້ນັ້ນ ມີສູງເຖິງ 2,91 ຕື້ ຢວນ ຫຼື ເທົ່າກັບ 406,7 ລ້ານໂດລາສະຫະລັດ.

ຂ່າວບອກວ່າ ບັ້ນເຄື່ອນໄຫວພາຍໃຕ້ໂຄງການ Sky Net ໃນແຕ່ລະໄລຍະນັ້ນ ໄດ້ມີເປົ້າໝາຍສະເພາະເຊັ່ນການປະຕິບັດງານໃນປີ 2015 ນັ້ນ (ປີສ້າງຕັ້ງ Sky Net) ແມ່ນເນັ້ນຈັບຕົວຜູ້ກະທຳຜິດຄືນມາຮັບໂທດຢູ່ປະເທດ. ສ່ວນການປະຕິບັດງານໃນປີ 2023 ນັ້ນ ເນັ້ນ 2 ຈຸດປະສົງຄື: ນຳໂຕພວກກະທຳຜິດກັບຄືນມາຮັບໂທດ ແລະ ເພື່ອເກັບກູ້ຄືນຊັບສິນທີ່ເສຍຫາຍຍ້ອນການສໍ້ລາດບັງຫຼວງ.

ເລື່ອງປິດທ້າຍທີ່ຢາກເວົ້າໃຫ້ຟັງຕື່ມນັ້ນ ກໍຄືຂ່າວກ່ຽວກັບນະໂຍບາຍດີໆຂອງຈີນ ເພື່ອເອື້ອອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວຈາກສະຫະລັດອາເມຣິກາ ທີ່ຕ້ອງການເຂົ້າໄປຈີນ ເຊິ່ງຂ່າວໄດ້ໃຫ້ລາຍລະອຽດວ່າ ສະຖານທູດ ແລະ ບັນດາກົງສູນໃຫຍ່ຂອງຈີນປະຈຳຢູ່ສະຫະລັດອາເມຣິກາ ໄດ້ປັບປຸງເຮັດໃຫ້ການອອກວີຊາ ປະເພດທ່ອງທ່ຽວງ່າຍດາຍຂຶ້ນ, ຄືພົນລະເມືອງສະຫະລັດ ທີ່ຕ້ອງການເຂົ້າໄປທ່ຽວຈີນນັ້ນ ບໍ່ຈຳເປັນຕ້ອງແຈ້ງກ່ຽວກັບປີ້ຍົນໄປ-ກັບ, ໂຮງແຮມທີ່ຈະພັກເຊົາ, ລາຍການທ່ອງທ່ຽວ, ໜັງສືເຊື້ອເຊີນ ກໍຄືເອກະສານຢັ້ງຢືນຈາກສະຖານທູດຈີນຄືເມື່ອກ່ອນອີກຕໍ່ໄປ.




## ຕອບແບບທັນຄວັນ

*# ບ່າວກະບື*

**ມື້**ນື້ໜຶ່ງ ຊາຍຂີ້ເມົາເວົ້າຂຶ້ນວ່າ:

"ອີ່ນເມຍຫັ້ນ ບໍ່ຕ່າງຫຍັງກັບເບຍທຳມະດາ, ສ່ວນແຟນສາວຫັ້ນປຽບເໝືອນເຫຼົ້າວິດສະກີ ຈອນນີດ່ຳ" ໄດ້ຍິນແນວນັ້ນ ຝ່າຍນາງເມຍເລີຍຕອບວ່າ:

"ຜົວຫັ້ນ ຄືກັບລົດຖີບຄັນເກົ່າໆ ສ່ວນບ່າວແຟນຫັ້ນ ຄືລົດເບັນແມັກຊູດິດ".

## REPARTEE

*# BAOKBU*

One day, a druken man said:

"Wife is average beer and lover is Johny Black." Hearing that, The wife replied:

"Husband is old bicycle and lover is Benz Mercedes."




● ໂດຍ : ພູຜາ

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ